ຮັບຮອງທີ່ກອງປະຊຸມ AMAF ຄັ້ງທີ 40
11 ຕຸລາ 2018
ຮ່າໂນຍ, ຫວຽດນາມ

# ບົດແນະນໍາ ຂອງອາຊຽນ ວ່າດ້ວຍການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານ ສະບຽງອາຫານ, ກະສິກໍາ ແລະ ປ່າໄມ້

**ກຸ່ມວິຊາການອາຊຽນ ກ່ຽວກັບການພັດທະນາດ້ານກະສິກໍາ**
**ແລະ ການຄົ້ນຄວ້າ (ATWGARD)**
**2018**

Unofficial translation by:
Food and Agriculture Organization of the United Nations

## 1. ສາລະບານ


**1.** ຄວາມເປັນມາ .......... 3

**2.** ວັດຖຸປະສົງ ແລະ ການກຳນົດທິດທາງ .......... 5

**3.** ຂອບເຂດ ແລະ ການນິຍາມ .......... 6

**4.** ການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (FAF) ແລະ ສິ່ງທ້າທາຍ .......... 9

4.1. ຄວາມໝັ້ນຄົງດ້ານສະບຽງອາຫານ .......... 9

4.2. ສິດຕໍ່ທີ່ດິນ .......... 10

4.3. ວຽກເຮັດງານທຳ ແລະ ການລ້ຽງຊີບ .......... 11

4.4. ການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ .......... 12

4.5. ຄວາມສາມາດດ້ານວິຊາການ ແລະ ສະຖາບັນ .......... 12

4.6. ຄວາມລົ້ມເຫຼວຂອງໂຄງການ ແລະ ສັນຍາລະຫວ່າງ ລັດ - ນັກລົງທຶນ .......... 13

**5.** ຄູ່ມືອາຊຽນສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ .......... 14

ຄຳແນະນຳ ທີ 1: ປະກອບສ່ວນໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພດ້ານສະບຽງອາຫານ ແລະ ໂພຊະນາການທີ່ດີກວ່າ .......... 14

ຄຳແນະນຳທີ 2: ປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດແບບຍືນຍົງ, ເທົ່າທຽມ ແລະ ທົ່ວເຖິງ ແລະ ການລົບລ້າງຄວາມທຸກຍາກ .......... 15

ຄຳແນະນຳທີ 3: ຮັກສາຄວາມສະເໝີພາບ, ການມີສ່ວນຮ່ວມ ແລະ ການໃຫ້ສິດທິ ແກ່ແມ່ຍິງ, ຊາວໜຸ່ມ, ຊົນເຜົ່າພື້ນເມືອງ ແລະ ກຸ່ມຄົນສ່ວນນ້ອຍ .......... 16

ຄຳແນະນຳທີ 4: ເຄົາລົບສິດຖືຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ລວມທັງການເຂົ້າເຖິງນ້ຳ .......... 17

ບົດແນະນຳທີ 5: ອະນຸລັກ ແລະ ບໍລິຫານຊັບພະຍາກອນທຳມະຊາດແບບຍືນຍົງ, ໂດຍສະເພາະປ່າໄມ້ຂອງອາຊຽນ .......... 18

ບົດແນະນຳທີ 6: ສະໜັບສະໜູນການສ້າງ ແລະ ການກະຈາຍເຕັກໂນໂລຊີ ແລະ ການປະຕິບັດທີ່ເໝາະສົມ ແລະ ຍືນຍົງສຳລັບລະບົບ FAF ທີ່ມີປະສິດທິພາບດ້ານຊັບພະຍາກອນ, ໄດ້ໝາກຜົນ ແລະ ປອດໄພ .......... 19

ບົດແນະນຳທີ 7: ເພີ່ມຄວາມທົນທານ ແລະ ປະກອບສ່ວນໃຫ້ແກ່ ການຫຼຸດຜ່ອນ ແລະ ການປັບຕົວຕໍ່ການປ່ຽນແປງຂອງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ຜົນກະທົບອື່ນ .......... 20

ບົດແນະນຳທີ 8: ເຄົາລົບ ກົດໝາຍ ແລະ ລວມເອົາໂຄງສ້າງການບໍລິຫານ, ຂະບວນການ ແລະ ກົນໄກແກ້ໄຂຄຳຮ້ອງທຸກທີ່ທົ່ວເຖິງ ແລະ ໂປ່ງໃສ .......... 21

ບົດແນະນຳທີ 9: ປະເມີນ ແລະ ແກ້ໄຂຜົນກະທົບ ແລະ ສົ່ງເສີມຄວາມຮັບຜິດຊອບ .......... 23

ບົດແນະນຳທີ 10: ເສີມຂະຫຍາຍວິທີການຂອງພາກພື້ນ ຕໍ່ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນ FAF ຂອງອາຊຽນ . 23

**6.** ບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ອື່ນທີ່ກ່ຽວຂ້ອງ .......... 24

**7.** ທຸລະກິດການກະເສດ ແລະ ນັກລົງທຶນຂະໜາດໃຫຍ່ໃນ FAF, ລວມທັງນັກລົງທຶນຕ່າງປະເທດ.......... 24

7.1. ຜູ້ຜະລິດຂະໜາດນ້ອຍ ແລະ SME .......... 27

7.2. ຊຸມຊົນ .......... 27

7.3. ສັງຄົມພົນລະເຮືອນ .......... 28

7.4. ຜູ້ມີບົດບາດໃນຂະແໜງການເງິນ .......... 28

7.5. ປະເທດທີ່ເປັນບ້ານຂອງຜູ້ລົງທຶນ .......... 29

ເອກະສານຊ້ອຍທ້າຍ .......... 29

ເອກະສານອ້າງອີງ .......... 37

## 1. ຄວາມເປັນມາ

ໃນຂະນະທີ່ຄວາມຕ້ອງການດ້ານສະບຽງອາຫານເພີ່ມຂຶ້ນເນື່ອງຈາກປະຊາກອນທີ່ເພີ່ມຂຶ້ນ, ລາຍໄດ້ທີ່ເພີ່ມຂຶ້ນ ແລະ ການຫັນເປັນຕົວເມືອງໃນອາຊຽນ, ຂະແໜງກະສິກຳ ຈະຍັງສືບຕໍ່ດຶງດູດການລົງທຶນຈາກທັງພາຍໃນ ແລະ ຕ່າງປະເທດ, ໂດຍສະເພາະໃນເຂດທີ່ກຳລັງພັດທະນາ. ການລົງທຶນເພີ່ມຂຶ້ນໃນອາຫານ, ກະສິກຳ[1] ແລະ ປ່າໄມ້ໃນພາກພື້ນອາຊຽນ ແມ່ນມີຄວາມຈຳເປັນເພື່ອຊ່ວຍໃຫ້ມີຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ປັບປຸງຄວາມປອດໄພດ້ານສະບຽງອາຫານ, ແລະ ສ້າງການເຕີບໂຕທາງເສດຖະກິດ ແລະ ໂອກາດ.

ການດຶງດູດການລົງທຶນທີ່ປະກອບສ່ວນໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການຂະຫຍາຍຕົວທາງເສດຖະກິດ, ໃນຂະນະທີ່ຕ້ອງອະນຸລັກສິ່ງແວດລ້ອມນັ້ນ ໃນພາກປະຕິບັດຕົວຈິງ ແມ່ນມີຄວາມສັບສົນຫຼາຍ, ມັນຮຽກຮ້ອງໃຫ້ມີການແຊກແຊງຈາກລັດຖະບານຢ່າງຊານສະຫຼາດ ແລະ ມີປະສິດທິຜົນ. ຍົກຕົວຢ່າງ, ມັນບໍ່ພຽງພໍທີ່ຈະສົ່ງເສີມຜົນຜະລິດສະບຽງອາຫານ ໂດຍບໍ່ມີການພິຈາລະນາດ້ານໂພຊະນາການ, ຜົນກະທົບຕໍ່ຊຸມຊົນຊົນນະບົດ ຫຼື ຊົນເຜົ່າພື້ນເມືອງ, ຫຼື ຜົນກະທົບຕໍ່ສະພາບອາກາດ ແລະ ສິ່ງແວດລ້ອມ. ຕົວຢ່າງ ການກະສິກຳ, ໂດຍສະເພາະການລ້ຽງສັດ ແມ່ນຕົວປະກອບສ່ວນທີ່ສຳຄັນໃນການປ່ອຍອາຍພິດເຮືອນແກ້ວ, ແຕ່ຍັງສາມາດມີບົດບາດໃນການຫຼຸດຜ່ອນ ຫຼື ຕ້ານການປ່ອຍອາຍພິດເຫລົ່ານັ້ນ. ເຊັ່ນດຽວກັນນັ້ນ, ກໍ່ບໍ່ຄ່ອຍມີການຄຸ້ມຄອງປ່າໄມ້ແບບຍືນຍົງ.

ການລົງທຶນເຂົ້າໃນສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (FAF) ຕ້ອງມີຄວາມຮັບຜິດຊອບ ແລະ ມີຄວາມຍືນຍົງ, ແລະ ມຸ້ງໄປສູ່ການບັນລຸຜົນປະໂຫຍດທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ, ໃນຂະນະທີ່ຫຼຸດຜ່ອນຜົນກະທົບທາງລົບໃຫ້ຫຼາຍທີ່ສຸດ. ຄວາມຮັບຜິດຊອບທ້າຍສຸດໃນການບັນລຸໝາກຜົນດັ່ງກ່າວ ແມ່ນຂຶ້ນກັບລັດຖະບານ ແລະ ຜູ້ວາງນະໂຍບາຍ, ແຕ່ນັກລົງທຶນ ແລະ ສັງຄົມພົນລະເຮືອນກໍ່ມີບົດບາດສຳຄັນ. ຍົກຕົວຢ່າງ, ມັນມີຄວາມສ່ຽງດ້ານການຄ້າ ແລະ ຊື່ສຽງສູງຕໍ່ນັກລົງທຶນທີ່ບໍ່ສາມາດບັນລຸຄວາມສົມດຸນ ລະຫວ່າງ ຜົນຕອບແທນທາງການເງິນ ແລະ ການໃຫ້ຜົນປະໂຫຍດທາງສັງຄົມ.

ໃນເດືອນກັນຍາ 2017, ບັນດາລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ອາຊຽນ (AMAF) ໄດ້ຕົກລົງທີ່ຈະພັດທະນາ ບົດແນະນຳ ຂອງອາຊຽນວ່າດ້ວຍການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (“ບົດແນະນຳ”) ໃນກອງປະຊຸມປະຈ□າປີ ຄັ້ງທີ 39. ບົດແນະນຳ ແມ່ນອີງໃສ່ ຄະນະກຳມະການກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໂລກ, ຫຼັກການ ສຳລັບລະບົບກະສິກຳ ແລະ ລະບົບສະບຽງອາຫານຢ່າງມີຄວາມຮັບຜິດຊອບ (CFS-RAI) ແລະ ສະທ້ອນໃຫ້ເຫັນເຖິງຈຸດພິເສດ ແລະ ຄຸນລັກສະນະຂອງບັນດາປະເທດສະມາຊິກອາຊຽນ (AMS).

ບົດແນະນຳ ແມ່ນສ່ວນໜຶ່ງ ຂອງຂໍ້ລິເລີ່ມໃນວົງກວ້າງ ເພື່ອແນໃສ່ຮັບປະກັນວ່າການລົງທຶນໃນດ້ານກະສິກຳ ບັນລຸມາດຕະຖານໂລກ ແລະ ສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ແລະ ຍືນຍົງ (ຕາຕະລາງຊ້ອນທ້າຍ 1). ພ້ອມກັນນັ້ນ, ອາຊຽນໄດ້ເລີ່ມຕົ້ນຂະບວນການທີ່ເປັນລະບົບ ເພື່ອປະຕິບັດຕາມມາດຕະຖານໂລກ, ຍົກຕົວຢ່າງ ການຮັບຮອງເອົາວິໄສທັດ ແລະ ແຜນຍຸດທະສາດດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (2016); 4 ແຜນຍຸດທະສາດທີ່ກ່ຽວຂ້ອງກັບ FAF; ບົດແນະນຳໃນພາກພື້ນກ່ຽວກັບນະໂຍບາຍຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ (2017), ແລະ ກອບລະດັບພາກພື້ນດ້ານ PPP ເພື່ອການພັດທະນາເຕັກໂນໂລຊີໃນ FAF (2017).

ສ້າງຕັ້ງຂຶ້ນໃນປີ 1967, ອາຊຽນໄດ້ຂະຫຍາຍຕົວ ເພີ່ມສະມາຊິກເປັນ 10 ປະເທດ, ເຊິ່ງກວມເອົາດິນແດນທັງໝົດ ຂອງອາຊີຕາເວັນອອກສ່ຽງໃຕ້. ລາຍໄດ້ສະເລ່ຍຕໍ່ຫົວຄົນຂອງອາຊຽນໃນແຕ່ລະປີ 11,000 ໂດລາ ເຮັດໃຫ້ອາຊຽນຢູ່ໃນອັນດັບຕົ້ນຂອງບັນດາປະເທດທີ່ມີລາຍໄດ້ສູງປານກາງ ໃນການຈັດປະເພດຂອງທະນາຄານໂລກ ປີ 2017; ແລະ ໃນຂະນະທີ່ຄວາມແຕກຕ່າງກັນຂອງລະດັບສະເລ່ຍລາຍໄດ້ລະຫວ່າງ AMS ແມ່ນຍັງກວ້າງຫຼາຍ, ປະເທດກຳປູເຈຍ - ທີ່ເປັນປະເທດທີ່ທຸກກ່ອນໝູ່ - ຖືວ່າຢູ່ໃນກຸ່ມທີ່ມີລາຍໄດ້ຕໍ່າ - ປານກາງ (ຕາຕະລາງຊ້ອນທ້າຍ 2). ອາຍຸຍືນສະເລ່ຍນັບແຕ່ເກີດ ຂອງປະຊາກອນຂອງບັນດາປະເທດສະມາຊິກອາຊຽນ - ທັງຊາຍ ແລະ ຍິງແມ່ນຢູ່ໃນກຸ່ມທີ່ສູງທີ່ສຸດໃນໂລກ, ເຊິ່ງສະທ້ອນເຖິງລະດັບການພັດທະນາຂອງ

[1] ກະສິກຳລວມມີການປູກພືດ, ການລ້ຽງສັດ ແລະ ການປະມົງ

ພາກພື້ນ. ປະຈຸບັນອາຊຽນຍັງເປັນເຂດທີ່ມີຕົວເມືອງຫຼາຍ (54 ສ່ວນຮ້ອຍ ຂອງປະຊາຊົນໃນປະເທດທີ່ມີພົນລະເມືອງຫຼາຍທີ່ສຸດຂອງອາຊຽນ ຄື ອິນໂດເນເຊຍ, ອາໄສ ແລະ ເຮັດວຽກໃນເຂດຕົວເມືອງ) ແລະ ມີລາຍໄດ້ສະເລ່ຍຕໍ່ຫົວຄົນທີ່ເພີ່ມຂຶ້ນ, ອັນເຮັດໃຫ້ເກີດມີຄົນຊັ້ນກາງ ຂະໜາດໃຫຍ່ ແລະ ສຳຄັນ. ເຖິງຢ່າງໃດກໍ່ຕາມ, ຄວາມອຶດຫິວຍັງເປັນສິ່ງທ້າທາຍ. ຈຳນວນປະຊາຊົນໃນອາຊີຕາເວັນອອກ ແລະ ອາຊີຕາເວັນອອກສ່ຽງໃຕ້ທີ່ຂາດຄວາມໝັ້ນຄົງດ້ານອາຫານຮຸນແຮງເພີ່ມຂຶ້ນຈາກ 48 ລ້ານຄົນໃນປີ 2015 ມາເປັນ 71 ລ້ານຄົນໃນປີ 2016 (FAO, 2017).

ກະສິກຳ ຍັງເປັນສ່ວນສຳຄັນຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ (ປະເທດ 'CLMV') ແລະ ອິນໂດເນເຊຍ ແລະ ຟີລິບປິນ (ເນື່ອງຈາກວ່າປະຊາກອນຂະໜາດໃຫຍ່ ເຮັດວຽກໃນຂະແໜງກະສິກຳ; ສ່ວນໃຫຍ່ແມ່ນໄວໜຸ່ມ ແມ້ກະທັ້ງໃນທ້າຍປີ 2015) (ຕາຕະລາງຊ້ອນທ້າຍ 2). ແຕ່ໃນເວລາດຽວກັນ ຈຳນວນປະຊາກອນທີ່ອາໄສວຽກເຮັດງານທຳໃນຂະແໜງກະສິກຳ ແລະ ປ່າໄມ້ ກໍພັດຫຼຸດລົງ (ຮູບສະແດງທີ 1). ວິທີການຜັນຂະຫຍາຍປະຕິບັດບົດແນະນຳການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ຈະສະທ້ອນເຖິງຄຸນລັກສະນະທີ່ແຕກຕ່າງຂອງແຕ່ລະ AMS ແລະ ບົດ ບາດ ແລະ ຄວາມສຳຄັນຂອງຂະແໜງກະສິກຳ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

ເຖິງແມ່ນວ່າການຂະຫຍາຍຕົວຂອງປະຊາກອນໃນອາຊຽນຈະຊ້າລົງ, ປະຊາກອນໃນພາກພື້ນຍັງຈະເພີ່ມຂຶ້ນຈາກ 643 ລ້ານຄົນໃນປີ 2017 ມາເປັນເກືອບ 800 ລ້ານຄົນໃນປີ 2050. ນີ້ຈະເຮັດໃຫ້ອາຊຽນກາຍເປັນໜຶ່ງໃນພາກພື້ນທີ່ມີປະຊາກອນຫຼາຍທີ່ສຸດໃນໂລກ, ເຊິ່ງຈະພາໃຫ້ມີບັນຫາດ້ານຄວາມໝັ້ນຄົງດ້ານສະບຽງອາຫານ. ບັນຫາຈະຖືກທະວີຄູນ ໃນທິດສະວັດຂ້າງໜ້າເນື່ອງຈາກບັນຫາການປ່ຽນແປງຂອງດິນຟ້າອາກາດ ເພາະວ່າເປັນພາກພື້ນທີ່ເຕັມໄປດ້ວຍເກາະ - ມີຊາຍຝັ່ງທະເລທີ່ກວ້າງຂວາງ ແລະ ມີບັນດາເກາະນ້ອຍທີ່ນັບບໍ່ຖ້ວນ; ມັນຕັ້ງຢູ່ລະຫວ່າງມະຫາສະໝຸດອິນເດຍ ແລະ ປາຊີຟິກ, ເຊິ່ງຄາດຄະເນວ່າຈະມີສະພາບອາກາດປັ່ນປ່ວນ, ເຊັ່ນລົມພາຍຸໄຊໂຄລນ. ການລົງທຶນໃນກະສິກຳ ແລະ ປ່າໄມ້ຕ້ອງຄຳນຶງເຖິງຄວາມສ່ຽງດັ່ງກ່າວ. ໃນເວລາດຽວກັນ, ຍົກເວັ້ນ ບຣູໄນ ແລະ ສິງກະໂປ, AMS ທັງໝົດ ລ້ວນແຕ່ມີທີ່ດິນກະສິກຳ ແລະ ເປັນຜູ້ສົ່ງອອກກະສິກຳ ທີ່ສຳຄັນຢູ່ແລ້ວ. ການ ນຳໃຊ້ຄວາມຮັ່ງມີດັ່ງກ່າວຢ່າງມີຄວາມຮັບຜິດຊອບ ແລະ ຍືນຍົງ ຄວນຖືເປັນຫຼັກໃນການພິຈາລະນາ ສ□າລັບ AMS. ຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ, ໃນຂະນະທີ່ພາກພື້ນຕ້ອງເອົາໃຈໃສ່ຕໍ່ຄວາມສ່ຽງ ແລະ ອັນຕະລາຍທີ່ອາດຈະເກີດຂຶ້ນ, ຂະໜາດ ແລະ ຄວາມຫຼາກຫຼາຍຂອງຄວາມຮັ່ງມີທາງດ້ານກະສິກຳ ແລະ ປ່າໄມ້ຂອງພາກພື້ນ ສາມາດເປັນຊັບສິນ, ຖ້າຄຸ້ມຄອງໄດ້ດີ, ໃນການຕ້ານການປ່ອຍອາຍພິດເຮືອນແກ້ວ ແລະ ປົກປ້ອງສະພາບແວດລ້ອມ, ສັດ ແລະ ພືດທີ່ໃກ້ຈະສູນພັນ.

ບໍ່ຄືກັບພາກພື້ນອື່ນໆທີ່ກຳລັງພັດທະນາ, ຍົກເວັ້ນບາງສ່ວນຂອງອາເມລິກາລາຕິນ, ອາຊຽນເປັນທີ່ຕັ້ງຂອງບໍລິສັດກະສິກຳ ແລະ ປ່າໄມ້ທີ່ສຳຄັນຈຳນວນຫຼາຍ - ລວມທັງບາງວິສາຫະກິດນາໆຊາດທີ່ໃຫຍ່ທີ່ສຸດໃນໂລກ (MNEs) (ຕາຕະລາງຊ້ອນທ້າຍ 3). ບາງວິສາຫະກິດ, ເຊັ່ນ Sime Darby (ມາເລເຊຍ) ແລະ San Miguel (ຟີລິບປິນ) ມີຕົ້ນກຳເນີດແຕ່ສະຕະວັດທີ 19; ວິສາຫະກິດອື່ນເຊັ່ນ: Olam (ສິງກະໂປ) ແລະ PT Bakrie Sumatera Plantations (ອິນໂດເນເຊຍ) ໄດ້ຖືກສ້າງຕັ້ງຂຶ້ນໃນຊຸມປີບໍ່ດົນມານີ້. ຫຼາຍວິສາຫະກິດເຫຼົ່ານັ້ນມີການເຄື່ອນໄຫວທຸລະກິດລະດັບສາກົນ; ແລະ ສ່ວນຫຼາຍແມ່ນນັກລົງທຶນທີ່ສ□າຄັນໃນ AMS ອື່ນ. ໃນຄວາມເປັນຈິງແລ້ວ, ສຳລັບອາຊຽນໂດຍລວມ, 80 ສ່ວນຮ້ອຍ ຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທັງໝົດ ໃນຂະແໜງກະສິກຳ ແລະ ປ່າໄມ້ແມ່ນມາຈາກປະເທດສະມາຊິກອາຊຽນອື່ນ (ຮູບສະແດງທີ 2). ໃນຂະນະທີ່ບົດແນະນຳນີ້ ຈະນຳໃຊ້ກັບ AMS ສ່ວນໃຫຍ່ໃນຖານະເປັນປະເທດເຈົ້າພາບສຳລັບ FDI, ບົດແນະນຳຍັງຕ້ອງໄດ້ສະທ້ອນເຖິງສະພາບການທີ່ເປັນເອກະລັກຂອງອາຊຽນໃນບັນດາຂົງເຂດທີ່ກຳລັງພັດທະນາ ໃນຖານະທີ່ເປັນທັງແຫຼ່ງທີ່ມາ ແລະ ເປັນເຈົ້າພາບຂອງ FDI ໃນຂົງເຂດກະສິກຳ ແລະ ປ່າໄມ້; AMS ຈຳນວນໜຶ່ງ ຄວນພິຈາລະນາສ້າງບົດແນະນຳເພີ່ມເຕີມກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບ ສຳລັບ MNEs ຂອງຕົນທີ່ດຳເນີນທຸລະກິດໃນປະເທດອື່ນຂອງອາຊຽນ (ລວມທັງທີ່ບໍ່ແມ່ນອາຊຽນ).

ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ ແລະ ຟີລິບປິນ ( ແລະ ໃນລະດັບທີ່ນ້ອຍກວ່າ, ຫວຽດນາມ) ແມ່ນອີງໃສ່ FDI ຈາກປະເທດອື່ນຂອງອາຊຽນ ໃນດ້ານກະສິກຳ ແລະ ປ່າໄມ້ (ຮູບສະແດງທີ 2). ສິ່ງນີ້ສະທ້ອນໃຫ້ເຫັນໃນລະດັບໜຶ່ງ ຕໍ່ກັບພື້ນຖານບ້ານຂອງ MNEs ດ້ານກະສິກຳ ແລະ ປ່າໄມ້ ຂະໜາດໃຫຍ່ ໃນອາຊຽນ (ມາເລເຊຍ, ສິງກະໂປ, ຟີລິບປິນ ແລະ ໄທ) ທຽບກັບບ່ອນທີ່ພວກກ່ຽວລົງທຶນ (ຕາຕະລາງຊ້ອນທ້າຍ 4). ແຕ່ສະຖານະການແມ່ນສັບສົນກວ່ານັ້ນ; ຍົກຕົວຢ່າງ, ຫຼາຍວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃນດ້ານກະສິກຳ ແລະ ປ່າໄມ້ ຂອງຫວຽດນາມ ແລະ ອິນໂດເນເຊຍ - ແລະ ຈາກ AMS ອື່ນ ໄດ້ລົງທຶນຢູ່ປະເທດເພື່ອນບ້ານ (ບາງຄັ້ງ 'ແບບບໍ່ເປັນທາງການ').

ເນື່ອງຈາກວ່າອາຊຽນເປັນຊຸມຊົນຂະໜາດໃຫຍ່, ມີການຂະຫຍາຍຕົວທາງດ້ານເສດຖະກິດ, ຜົນກະທົບຂອງຂະແໜງການໃດໜຶ່ງ - ລວມທັງກະສິກຳ ແລະ ປ່າໄມ້ - ຕ້ອງໄດ້ເບິ່ງຜ່ານ ສາມມິຕິຂອງລະບົບຕ່ອງໂສ້ການສະໜອງ ແລະ ມູນຄ່າ ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ສາກົນ (Mirza et al 2017i). ຕ່ອງໂສ້ມູນຄ່າດັ່ງກ່າວ - ລວມທັງບັນດາຕ່ອງໂສ້ທີ່ເຊື່ອມຕໍ່ຊຸມຊົນໃນເຂດຊົນນະບົດ ແລະ ຕົວເມືອງ ໃນການສະໜອງອາຫານສຳເລັດຮູບ ໂດຍຜ່ານລະບົບຕ່ອງໂສ້ທີ່ເລີ່ມແຕ່ການຜະລິດຈົນຮອດການເກັບຮັກສາ, ການຂົນສົ່ງ, ການຜະລິດ, ຄັງສິນຄ້າ ແລະ ການຂາຍຍ່ອຍໃຫ້ຜູ້ບໍລິໂພກ - ເປັນໃຈກາງຂອງທັງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ບົດບາດຂອງກະສິກຳ ແລະ ປ່າໄມ້ ໃນຖານະເປັນເຄື່ອງຈັກສຳລັບການເຕີບໂຕ ແລະ ພັດທະນາ. ຍົກຕົວຢ່າງ, ການສົ່ງອອກພືດພັນໄປຂາຍໃນຕະຫລາດສາກົນ ສ້າງລາຍໄດ້ໃຫ້ແກ່ຊາວກະສິກອນຂະໜາດນ້ອຍ ແລະ ຄົນອື່ນໆ ຊຶ່ງສາມາດນຳໃຊ້ຊື້ອາຫານ, ຈ່າຍຄ່າຮຽນ ຫຼື ລົງທຶນໃນທຸລະກິດໃໝ່. ໃນຂະນະດຽວກັນ, ມັນຍັງມີຄວາມສ່ຽງທີ່ລາຄາຂອງຜະລິດຕະຜົນພາຍໃນປະເທດ ອາດຈະເພີ່ມຂຶ້ນ ອັນເນື່ອງຈາກຄວາມຕ້ອງການທີ່ສູງໃນຕະຫຼາດສາກົນ.

ບົດແນະນຳ ຮັບເອົາການເປັນໃຈກາງຂອງຕ່ອງໂສ້ການສະໜອງ ແລະ ມູນຄ່າ, ລວມທັງຜ່ານການກຳນົດລາຄາສິນຄ້າ ທີ່ຂາຍໂດຍຊາວກະສິກອນ; ໂດຍສະນັບສະໜູນການປັບປຸງຄຸນນະພາບ ແລະ ມາດຕະຖານຄວາມປອດໄພໃນທົ່ວລະບົບຕ່ອງໂສ້; ແລະ ຮັບຮູ້ວ່າ ການລົງທຶນບໍ່ຈຳເປັນຕ້ອງປະກອບສ່ວນໂດຍກົງເຂົ້າໃນການຜະລິດອາຫານ ເພື່ອຕອບສະໜອງຈຸດປະສົງ ຂອງຄວາມໝັ້ນຄົງດ້ານສະບຽງອາຫານ. ຕ່ອງໂສ້ການສະໜອງ ແລະ ມູນຄ່າໃນການກະສິກຳ ແລະ ປ່າໄມ້ ຍັງໝາຍຄວາມອີກວ່າ ບໍ່ຈຳເປັນຕ້ອງມີນັກລົງທຶນ ແລະ ການລົງທຶນທີ່ສຳຄັນ ໃນການເຮັດຟາມ ຫຼື ປູກຝັງ ດ້ວຍຕົນເອງ (ພວກເຂົາອາດຈະມີຖານຕັ້ງຢູ່ຕ່າງປະເທດກໍ່ໄດ້). ຜູ້ຜະລິດ ສາມາດເຮັດສັນຍາກັບ ຊາວກະສິກອນຂະໜາດນ້ອຍ ເພື່ອສະໜອງພືດ ແລະ ຜະລິດຕະພັນປ່າໄມ້ ໃຫ້ແກ່ໂຮງງານຂອງຕົນ, ໂດຍຈະຕ້ອງມີບົດແນະນຳ ກ່ຽວກັບການເຮັດສັນຍາກະສິກຳ ໃນຮູບແບບຕ່າງໆ. ນັກລົງທຶນ, ບໍລິສັດ ແລະ ຜູ້ ຊາວກະສິກອນຂະໜາດນ້ອຍ ໃນຕ່ອງໂສ້ມູນຄ່າ ລ້ວນແຕ່ແມ່ນຜູ້ທີ່ກ່ຽວຂ້ອງ ໃນການຮັບປະກັນການລົງທຶນຢ່າງມີຄວາມຮັບຜິດຊອບໃນ ດ້ານກະສິກຳ ແລະ ປ່າໄມ້ (ພາກທີ 6).

ຜົນກະທົບຂອງການລົງທຶນຂະໜາດໃຫຍ່ ແມ່ນແຕກຕ່າງກັບການລົງທຶນຂະໜາດນ້ອຍ ແລະ ກາງ, ດັ່ງນັ້ນ ຄວາມຮັບຜິດຊອບຂອງນັກລົງທຶນ ໃນບົດແນະນຳສະບັບນີ້ແມ່ນອີງຕາມຂະໜາດ ແລະ ລະດັບຂອງຜົນກະທົບ ທີ່ອາດຈະເກີດຂຶ້ນ. ຍົກຕົວຢ່າງ, ການລົງທຶນຂອງຊາວກະສິກອນຂະໜາດນ້ອຍ ກວມເອົາສ່ວນໃຫຍ່ຂອງການໃຊ້ຈ່າຍໃນດ້ານກະສິກຳທັງໝົດ ໃນຫຼາຍປະເທດອາຊຽນ, ແຕ່ວ່າການໃຊ້ຈ່າຍສ່ວນໃຫຍ່ນີ້ ແມ່ນເກີດຂຶ້ນພາຍໃນຄົວເຮືອນ ແລະ ຕົ້ນຕໍແມ່ນເພື່ອກຸ້ມຕົນເອງ. ກົງກັນຂ້າມ, ໃນກໍລະນີຂອງປະເທດມາເລເຊຍ, ວິສາຫະກິດກະສິກຳ ແລະ ປ່າໄມ້ຂະໜາດໃຫຍ່ ເປັນຕົວແທນປະມານ 1/4 ຂອງວິສາຫະກິດທັງໝົດໃນອຸດສະຫະກຳດ້ານນີ້ ແລະ ມີການລົງທຶນທີ່ໃຫຍ່ທີ່ສຸດ. ບໍລິສັດຂະໜາດໃຫຍ່ ກໍມີອັດຕາສ່ວນທີ່ສູງເຊັ່ນດຽວກັນຢູ່ໃນບັນດາປະເທດອາຊຽນອື່ນໆ ເຊັ່ນໃນປະເທດໄທ, ຫວຽດນາມ, ຟີລິບປິນ, ອິນໂດເນເຊຍ ແລະ ສິງກະໂປ (ຕາຕະລາງຊ້ອນທ້າຍ 5).

ສິ່ງທີ່ສຳຄັນ, ຊາວກະສິກອນຂະໜາດນ້ອຍ ແລະ SME ອາດກວມເອົາການລົງທຶນສ່ວນໃຫຍ່ໃນການກະສິກຳ ແລະ ປ່າໄມ້ໃນ AMS, ແຕ່ວ່າຂະໜາດຂອງແຕ່ລະໂຄງການແມ່ນມີຂະໜາດນ້ອຍກວ່າຫຼາຍ ເມື່ອທຽບໃສ່ການລົງທຶນຂອງບໍລິສັດຂະໜາດໃຫຍ່ ບົດແນະນຳສະບັບນີ້ ຮັບຮູ້ເຖິງຄວາມແຕກຕ່າງນີ້, ໂດຍສະເພາະ ແມ່ນຍ້ອນຄຳວ່າ "ການປະຕິບັດຢ່າງເທົ່າທຽມກັນ" ຈະເປັນພາລະອັນໜັກໜ່ວງ ໃຫ້ແກ່ຊາວກະສິກອນ ແລະ SME ທີ່ມີຊັບພະຍາກອນຢ່າງຈຳກັດ. ພ້ອມດຽວກັນນີ້, ບົດແນະນຳ ຍັງພິຈາລະນາລັກສະນະຂອງຜົນກະທົບຈາກຜູ້ມີສ່ວນຮ່ວມທີ່ແຕກຕ່າງກັນ; ແລະ ຮັບຮູ້ວ່າ ຂະໜາດນ້ອຍ ບໍ່ໄດ້ໝາຍຄວາມໂດຍອັດຕະໂນມັດວ່າ ມີຂໍ້ຈຳກັດດ້ານຊັບພະຍາກອນ: ເຕັກໂນໂລຊີດີຈີຕອນ ແລະ ຊີວະພາບ, ໃນບັນດາສິ່ງອື່ນໆ, ແມ່ນອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງວິສາຫະກິດຂະໜາດນ້ອຍ ແລະ ຈຸລະພາກທີ່ລ້ຳສະໄໝ. ດັ່ງນັ້ນ, ບົດແນະນຳ ຮັບປະກັນວ່າ ໃນຂະນະທີ່ຊາວກະສິກອນຂະໜາດນ້ອຍ ແລະ SMEs ມີຄວາມຮັບຜິດຊອບຢ່າງເຕັມທີ່ ໃນການລົງທຶນດ້ານກະສິກຳຂອງຕົນ , ວິທີທີ່ພວກກ່ຽວຕ້ອງປະຕິບັດພັນທະຂອງຕົນແມ່ນ ເໝາະສົມກັບຂໍ້ຈຳກັດ ດ້ານຊັບພະຍາກອນ ທີ່ພວກກ່ຽວປະເຊີນ; ແຕ່ໃຫ້ເຂົ້າໃຈວ່າ ສິ່ງດັ່ງກ່າວ ຕ້ອງບໍ່ເປັນໄພໃຫ້ແກ່ຄວາມປອດໄພດ້ານສະບຽງອາຫານ ຫຼື ສິ່ງແວດລ້ອມ. ລັດຖະບານ, ບໍລິສັດຂະໜາດໃຫຍ່ ແລະ ພາກສ່ວນອື່ນໆ ສາມາດພັດທະນາກົນໄກການສະໜັບສະໜູນ ເພື່ອຊ່ວຍຊາວກະສິກອນຂະໜາດນ້ອຍ ແລະ SME ໃຫ້ໄດ້ມາດຕະຖານທີ່ຈຳເປັນ.

ເຖິງວ່າ ບົດແນະນຳກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບ ແມ່ນຄວາມຈຳເປັນ, ໃນທ້າຍທີ່ສຸດ ມັນກໍຍັງເປັນສິ່ງສຳຄັນທີ່ກ່ອນອື່ນໝົດຈະຕ້ອງດຶງດູດການລົງທຶນ. ບັນດາປະເທດສະມາຊິກອາຊຽນ ໄດ້ປະສົບຜົນສຳເລັດຫຼາຍ ໃນການຊຸກຍູ້ການລົງທຶນໃນການຜະລິດ ແລະ ການບໍລິການໂດຍການດຶງດູດນັກລົງທຶນຈາກຕ່າງປະເທດ ແລະ ກະຕຸກຊຸກຍູ້ວິສາຫະກິດພາຍໃນປະເທດ. ເຖິງຢ່າງໃດກໍ່ຕາມ, ຜົນງານໃນດ້ານກະສິກຳ ແລະ ປ່າໄມ້ ຂອງພວກເຂົາແມ່ນຍັງບໍ່ຄ່ອຍເປັນທີ່ເພິ່ງພໍໃຈ ທັງແບບທຽບຖານ ແລະ ເດັດຖານ (ເອກະສານຊ້ອນທ້າຍ 3). ມັນເປັນສິ່ງຈຳເປັນທີ່ຈະຕ້ອງຍົກສູງການລົງທຶນໃນບັນດາຂະແໜງການ FAF ເພື່ອບັນລຸການພັດທະນາເສດຖະ ກິດແບບຍືນຍົງ. ບົດແນະນຳ ສາມາດຊ່ວຍຊຸກຍູ້ການລົງທຶນ ແລະ ສິ່ງເສີມຜົນຕອບແທນ ແລະ ນະໂຍບາຍສິ່ງເສີມໃນໄລຍະຍາວເຊິ່ງຈະຊ່ວຍປັບປຸງການຕັດສິນໃຈດ້ານການລົງທຶນ ແລະ ຄຸນນະພາບຂອງການລົງທຶນ.

## 2. ວັດຖຸປະສົງ ແລະ ການກຳນົດທິດທາງ

ຈຸດປະສົງຕົ້ນຕໍຂອງບົດແນະນຳ ແມ່ນເພື່ອສົ່ງເສີມການລົງທຶນໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ໃນພາກພື້ນອາຊຽນ ຊຶ່ງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດໃນພາກພື້ນ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ຄວາມປອດໄພຂອງອາຫານ ແລະ ຜົນປະໂຫຍດທີ່ເທົ່າທຽມກັນ, ພ້ອມທັງການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ. ຈຸດປະສົງອື່ນ ລວມມີ:

- ສ້າງເງື່ອນໄຂສະດວກເພື່ອດຶງດູດການລົງທຶນຢ່າງມີຄວາມຮັບຜິດຊອບໃນບັນດາຂະແໜງການ FAF ໂດຍຜ່ານຂອບວຽກດ້ານ ນະໂຍບາຍ ແລະ ລະບຽບການທີ່ຈະແຈ້ງໃນຂອບເຂດທົ່ວປະເທດ ແລະ ວິທີການທີ່ສອດຄ່ອງກວ່າເກົ່າໃນທົ່ວອາຊຽນ; ຄວາມກະຈ່າງແຈ້ງຂອງບົດບາດ ສຳລັບອົງກອນ ແລະ ສະຖາບັນຕ່າງໆທີ່ກ່ຽວຂ້ອງ; ແລະ ລະບົບສະຖາບັນ ແລະ ຂັ້ນຕອນທີ່ມີການອອກແບບທີ່ດີ ສຳລັບການສົ່ງເສີມ, ການກວດຜ່ານ, ການຕິດຕາມ ແລະ ມາດຕະການອື່ນ ຕໍ່ການລົງທຶນ.
- ພິຈາລະນາເອົາທຸກພາກສ່ວນມີສ່ວນຮ່ວມໃນການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ເປັນສ່ວນໜຶ່ງ ຂອງລະບົບນິເວດ, ເຊິ່ງຕ້ອງໄດ້ຮັບການເອົາໃຈໃສ່ທະນຸບຳລຸງ. ການສົ່ງເສີມການລົງທຶນອາດຈະເປັນເປົ້າໝາຍໜຶ່ງ, ແຕ່ຜົນປະໂຫຍດຂອງພາກສ່ວນມີສ່ວນຮ່ວມອື່ນໆ, ລວມທັງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ, ຊາວກະສິກອນຂະໜາດນ້ອຍ ແລະ ກຸ່ມທີ່ມີຄວາມສ່ຽງ ຫຼື ກຸ່ມດ້ອຍໂອກາດ, ກໍ່ຕ້ອງຖືເປັນບູລິມະສິດເຊັ່ນກັນ. ດັ່ງນັ້ນ, ການຮັກສາຄວາມດຸ່ນດ່ຽງລະຫວ່າງຜົນປະໂຫຍດ - ລວມທັງການເສີມສ້າງຂີດຄວາມສາມາດ ຂອງພາກສ່ວນມີສ່ວນຮ່ວມ, ຊຶ່ງຕາມສັນຍາຮຽກຮ້ອງໃຫ້ນັກລົງທຶນປະຕິບັດພັນທະຂອງຕົນ ແລະ ສ້າງເຄື່ອງມື ເພື່ອສືບຕໍ່ຮ່ວມມື - ຈະເປັນການສະໜັບສະໜູນຈຸດປະສົງຕົ້ນຕໍຂອງບົດແນະນຳສະບັບນີ້.
- ສຳລັບອາຊຽນໂດຍລວມ, ສ້າງ ກອບເພື່ອເປັນແນວທາງໃຫ້ແກ່ AMS, ນັກລົງທຶນຂະໜາດໃຫຍ່ ແລະ ນ້ອຍ ແລະ ພາກສ່ວນທີ່ມີບົດບາດອື່ນໆ ໃນການພັດທະນາການລົງທຶນດ້ານກະສິກຳ ຢ່າງມີຄວາມຮັບຜິດຊອບ ແລະ ຍືນຍົງ ແລະ ດ້ານຕ່ອງໂສ້ມູນຄ່າ ໃນພາກພື້ນ.
- ທ້າຍສຸດ, ສ້າງບັນດາຜົນປະໂຫຍດ ເຊິ່ງຈະເປັນບ່ອນອີງໃຫ້ແກ່ການຕັດສິນໃຈ, ການປະພຶດ ແລະ ການກະທຳ ໃນໄລຍະກາງ - ໄລຍະຍາວ.

ບົດແນະນຳສະບັບນີ້ແມ່ນແບບສະໝັກໃຈ ແລະ ບໍ່ຂັດກັບກົດໝາຍ ແລະ ລະບຽບການພາຍໃນ ທີ່ມີຢູ່ແລ້ວ ຫຼື ກັບສົນທິສັນຍາສາກົນທີ່ມີຜົນບັງຄັບໃຊ້. ບົດແນະນຳສະບັບນີ້ບໍ່ເປັນການປ່ຽນແທນຄວາມຈຳເປັນໃນການປັບປຸງກອບກົດໝາຍ ແລະ ນະໂຍບາຍໃນລະດັບຊາດ. ແທ້ຈິງແລ້ວ, ສະພາບແວດລ້ອມດ້ານລະບຽບການທີ່ເຂັ້ມແຂງ ແລະ ສະເໝີພາບກວ່າໃນລະດັບຊາດ ແມ່ນການຮັບປະກັນທີ່ດີທີ່ສຸດ ເພື່ອບັນລຸຜົນປະໂຫຍດທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຈາກການລົງທຶນ.

## 3. ຂອບເຂດ ແລະ ຄຳນິຍາມ

ບົດແນະນຳຂອງອາຊຽນກ່ຽວກັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ຕົ້ນຕໍແມ່ນແນໃສ່ພາກລັດໃນອາຊຽນ ລວມທັງລັດຖະບານ ແລະ ບັນດາອົງການລັດ ແລະ ສະຖາບັນໃນແຕ່ລະ AMS ແລະ ອົງການຈັດຕັ້ງເໜືອລັດ ເຊັ່ນ: ກອງເລຂາອາຊຽນ ແລະ ອົງການຈັດຕັ້ງພາກພື້ນທີ່ກ່ຽວຂ້ອງ (ພາກທີ 5). ບົດແນະນຳຍັງແນໃສ່ພາກສ່ວນອື່ນທີ່ກ່ຽວຂ້ອງ, ລວມທັງພາກເອກະຊົນ, ສັງຄົມພົນລະເຮືອນ, ຊຸມຊົນ, ຄູ່ຮ່ວມພັດທະນາ ແລະ ອື່ນໆ (ພາກທີ 6). ໃຫ້ຖືເປັນເອກະສານທີ່ຍັງຈະສືບຕໍ່ປັບປຸງ, ເພື່ອແນໃສ່ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ທີ່ສູງທີ່ສຸດກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບ. ບົດແນະນຳຍັງໄດ້ປັບໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາ ແບບຍືນຍົງຂອງສະຫະປະຊາຊາດ (SDGs) ທີ່ກ່ຽວຂ້ອງ, ລວມທັງເປົ້າໝາຍ 'ບໍ່ມີຄວາມທຸກຍາກ' (ເປົ້າໝາຍທີ 1 ເພື່ອລຶບລ້າງຄວາມທຸກຍາກໃນທຸກຮູບແບບ ແລະ ໃນທຸກມິຕິ ພາຍໃນປີ 2030), "ຄວາມອຶດຫິວເທົ່າສູນ" (ເປົ້າໝາຍທີ 2 ທີ່ຈະບັນລຸໃນປີດຽວກັນ), 'ຄວາມສະເໝີພາບລະຫວ່າງຍິງ-ຊາຍ (ເປົ້າໝາຍທີ 5, ຢຸດຕິທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ເດັກຍິງ) ແລະ 'ການປະຕິບັດງານດິນຟ້າອາກາດ' (ເປົ້າໝາຍທີ 13). ໂດຍຮັບຮູ້ເຖິງຄວາມສຳຄັນຂອງຕ່ອງໂສ້ມູນຄ່າລະດັບຊາດ, ພາກພື້ນ ແລະ ທົ່ວໂລກໃນກິດຈະກຳ FAF, ບົດແນະນຳ ຍັງພະຍາຍາມນຳໃຊ້ມາດຕະຖານຄວາມຍືນຍົງແບບສະໝັກໃຈ.

ບົດແນະນຳ ແມ່ນອີງໃສ່ຫຼັກການ ແລະ ບົດແນະນຳທີ່ສຳຄັນທີ່ມີຢູ່ແລ້ວ, ໂດຍສະເພາະ ຫຼັກການຂອງຄະນະກຳມະການວ່າດ້ວຍຄວາມໝັ້ນຄົງດ້ານສະບຽງອາຫານໂລກ ກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບໃນລະບົບກະສິກຳ ແລະ ອາຫານ (CFS-RAI), ບົດແນະນຳແບບສະໝັກໃຈກ່ຽວກັບການບໍລິຫານຢ່າງມີຄວາມຜິດຊອບຕໍ່ກັບສິດຄອບຄອງນຳໃຊ້ທີ່ດິນ, ປ່າໄມ້ ແລະ ການປະມົງ (VGGT) ), ພ້ອມທັງປະສົບການໃນພາກພື້ນ AMS ແລະ ການປະຕິບັດທີ່ດີທີ່ສຸດຂອງສາກົນ (ຕາຕະລາງຊ້ອນທ້າຍ 1). ບົດແນະນຳແມ່ນສອດຄ່ອງກັບກອບການປະສານງານ ຄວາມປອດໄພດ້ານສະບຽງອາຫານຂອງອາຊຽນ ແລະ ແຜນຍຸດທະສາດການປະຕິບັດງານກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໃນພາກພື້ນອາຊຽນ (AIFS SPA-FS), ເຊິ່ງແນໃສ່ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃນໄລຍະຍາວໃນພາກພື້ນ. ບົດແນະນຳຍັງສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ພັນທະສັນຍາສາກົນທີ່ມີຢູ່ແລ້ວ.

ບົດແນະນຳໄດ້ກຳນົດນະໂຍບາຍ ແລະ ທາງເລືອກໃນການຈັດຕັ້ງທີ່ເປັນບ່ອນອີງ ໃຫ້ແກ່ AMS ໃນຄວາມພະຍາຍາມ ຮັບປະກັນການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໂດຍບໍ່ໄດ້ມີຈຸດປະສົງເປັນຄຳຖະແຫຼງອັນຄົບຖ້ວນ ຫຼື ຜູກມັດ ກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF.

ເພື່ອຈຸດປະສົງຂອງບົດແນະນຳສະບັບນີ້, ໄດ້ນຳໃຊ້ ຄຳນິຍາມ ແລະ ຄຳສັບຕໍ່ໄປນີ້:

- **ກະສິກຳ ແລະ ປ່າໄມ້.** ອາຊຽນຖືວ່າການກະສິກ□າ ປະກອບດ້ວຍ 3 ຂະແໜງການຍ່ອຍຄື: ການປູກພືດ, ການລ້ຽງສັດ ແລະ ການປະມົງ. ປ່າໄມ້ ຖືວ່າເປັນຂະແໜງແຍກຕ່າງຫາກ (ບໍ່ຄືກັບ FAO ເຊິ່ງລວມເອົາປ່າໄມ້ເຂົ້າໃນນິຍາມກະສິກຳ). ບົດແນະນຳ ຍັງນຳໃຊ້ຕໍ່ກັບການລ້ຽງສັດ ແລະ ການປະມົງ, ໂດຍຮັບຮູ້ຈຸດພິເສດສະເພາະຂອງສອງຂະແໜງການຍ່ອຍນີ້.

- **ປະເທດເຈົ້າພາບ ແລະ ປະເທດບ້ານຂອງຜູ້ລົງທຶນ**: ໃນກໍລະນີການລົງທຶນຢູ່ຕ່າງປະເທດ, ປະເທດທີ່ມີການ ລົງທຶນເກີດຂຶ້ນເອີ້ນວ່າ 'ປະເທດເຈົ້າພາບ'; ເກືອບທັງໝົດ AMS ແມ່ນປະເທດເຈົ້າພາບ FAF. ປະເທດທີ່ນັກລົງທຶນມີຮາກຖານຕັ້ງຢູ່ ເອີນວ່າ “ປະເທດບ້ານຂອງຜູ້ລົງທຶນ”. AMS ຫຼາຍປະເທດ ແມ່ນປະເທດບ້ານຂອງຜູ້ລົງທຶນ ຕາມຄຳນິຍາມນີ້. ຍິ່ງໄປກວ່ານັ້ນ, ບາງ AMS ເປັນທັງຜູ້ໄດ້ຮັບການລົງທຶນ ແລະ ເປັນແຫຼ່ງທີ່ມາຂອງການລົງທຶນທີ່ສຳຄັນ. ເນື່ອງຈາກລະດັບທີ່ສຳຄັນຂອງການລົງທຶນຕ່າງປະເທດໂດຍກົງ ພາຍໃນອາຊຽນ, ບາງສ່ວນຂອງບົດແນະນຳຈະກ່ຽວຂ້ອງສະເພາະກັບບາງກຸ່ມຍ່ອຍ.

- **ຄົນພື້ນເມືອງ.** ໃນຂະນະທີ່ບໍ່ມີຄ□ານິຍາມສາກົນຢ່າງເປັນທາງການກ່ຽວກັບຊົນເຜົ່າພື້ນເມືອງ, ໄດ້ມີການຍອມຮັບໂດຍທົ່ວໄປວ່າເປັນ: “ຄົນຊົນເຜົ່າໃນປະເທດທີ່ເປັນເອກະລາດ ຊຶ່ງມີສະພາບສັງຄົມ, ວັດທະນະທຳ ແລະ ເສດຖະກິດ ແຕກຕ່າງຈາກພວກຄົນອື່ນໃນວົງຄະນາຍາດແຫ່ງຊາດ ແລະ ມີສະຖານະທີ່ຖືກຄຸ້ມຄອງທັງໝົດ ຫຼື

ບາງສ່ວນໂດຍ ຮີດຄອງປະເພນີຂອງເຂົາເຈົ້າເອງ ຫຼື ຕາມກົດໝາຍ ຫຼື ລະບຽບການພິເສດ". ນອກນັ້ນ, ຍັງລວມເອົາ, "ປະຊາຊົນໃນບັນດາປະເທດອິດສະຫຼະທີ່ຖືວ່າເປັນຊົນເຜົ່າພື້ນເມືອງຍ້ອນເຊື້ອສາຍຂອງພວກກ່ຽວ ແມ່ນສືບທອດມາຈາກປະຊາກອນທີ່ເຄີຍອາໄສຢູ່ໃນປະເທດ, ຫຼື ພື້ນທີ່ພູມສາດທີ່ປະເທດດັ່ງກ່າວຂຶ້ນກັບ, ໃນເວລາທີ່ມີການເຂົ້າຄອບຄອງ ຫຼື ສ້າງເປັນອານານິຄົມ ຫຼື ການສ້າງຕັ້ງເຂດແດນຂອງລັດປະຈຸບັນ ແລະ ໂດຍບໍ່ກ່ຽວກັບສະຖານະພາບທາງກົດໝາຍ, ພວກເຂົາຍັງຮັກສາບາງສ່ວນ ຫຼື ທັງໝົດຂອງສະຖາບັນທາງສັງຄົມ, ເສດຖະກິດ, ວັດທະນະທຳ ແລະ ການເມືອງຂອງຕົນເອງ." (ສົນທິສັນຍາ ILO 169, UNDRIP). ນອກຈາກນັ້ນ, ເວທີສົນທະນາປະຈຳຂອງສະຫະປະຊາຊາດ ກ່ຽວກັບປະຊາກອນພື້ນເມືອງ ກໍ່ໄດ້ເນັ້ນໜັກ ເຖິງການເຊື່ອມໂຍງທີ່ແໜ້ນແຟ້ນກັບເຂດແດນ ແລະ ຊັບພະຍາກອນທຳມະຊາດອ້ອມຂ້າງ. ໃນບາງ AMS, ຊົນເຜົ່າພື້ນເມືອງຖືກເອີ້ນວ່າ "ຊົນເຜົ່າ".

- **ນັກລົງທຶນ:** ນັກລົງທຶນແມ່ນບໍລິສັດທີ່ປະຕິບັດໂຄງການການຄ້າ. ນັກລົງທຶນສາມາດເປັນພາກລັດ ຫຼື ເອກະຊົນ, ພາຍໃນປະເທດ ຫຼື ຕ່າງປະເທດ, ໃຫຍ່ ຫຼື ນ້ອຍ.

- **ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ.** ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ ໝາຍເຖິງທັງການຍ້າຍຖິ່ນຖານທາງດ້ານຮ່າງກາຍ (ການຍົກຍ້າຍ ຫຼື ສູນເສຍທີ່ພັກອາໄສ) ແລະ ການຍ້າຍຖິ່ນຖານທາງເສດຖະກິດ (ການສູນເສຍຊັບສິນ ຫຼື ການເຂົ້າເຖິງຊັບສິນທີ່ນຳໄປສູ່ການສູນເສຍແຫຼ່ງລາຍໄດ້ ຫຼື ວິຖີການດຳລົງຊີວິດ ອື່ນໆ) ເຊິ່ງເປັນຜົນມາຈາກການຄອບຄອງທີ່ດິນທີ່ກ່ຽວຂ້ອງກັບໂຄງການ ແລະ/ ຫຼື ຂໍ້ຈຳກັດໃນການນຳໃຊ້ທີ່ດິນ. ການຍົກຍ້າຍຈັດສັນຈະຖືວ່າເປັນແບບບໍ່ສະໝັກໃຈ ເມື່ອຜູ້ທີ່ຖືກກະທົບ ຫຼື ຊຸມຊົນບໍ່ມີສິດ ທີ່ຈະປະຕິເສດການເວນຄືນທີ່ດິນ ຫຼື ຂໍ້ຈຳກັດໃນການນຳໃຊ້ທີ່ດິນ ເຊິ່ງກໍ່ໃຫ້ເກີດການຍົກຍ້າຍຈັດສັນ ທາງດ້ານ ກາຍະພາບ ຫຼື ເສດຖະກິດ (ມາດຕະຖານການປະຕິບັດງານ ທີ 5 ຂອງ IFC) . ໃນບາງກໍລະນີທີ່ກ່ຽວກັບ ຊຸມຊົນຄົທ້ອງຖິ່ນ ແລະ ຄົນພື້ນເມືອງການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ ຍັງສາມາດລວມເອົາການຍ້າຍ ຖິ່ນຖານ ທາງວັດທະນະທຳ ແລະ ຈິດວິນຍານ.

- **ພາກເອກະຊົນ:** ພາກເອກະຊົນ ປະກອບມີ ຊາວກະສິກອນຂະໜາດນ້ອຍ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs), ແລະ ບັນດາບໍລິສັດຂະໜາດໃຫຍ່.

## 4. ການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (FAF) ແລະ ສິ່ງທ້າທາຍ

ການລົງທຶນໃນ FAF ແມ່ນ ໜຶ່ງໃນວິທີທີ່ສຳຄັນທີ່ສຸດ ສຳລັບບັນດາປະເທດອາຊຽນ ໃນການສະໜອງການຈ້າງງານ ແລະ ຊີວິດການເປັນຢູ່, ຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງຄວາມປອດໄພດ້ານສະບຽງອາຫານ ແລະ ໂພສະນາການ. ການລົງທຶນຢ່າງມີຄວາມຮັບຜິດຊອບ ຮຽກຮ້ອງທັງພາກລັດ ແລະ ເອກະຊົນ. ການລົງທຶນພາກລັດຈາກ AMS ແມ່ນມີຄວາມສຳຄັນຫຼາຍໃນການສະໜອງສິນຄ້າສາທາລະນະ ເຊັ່ນ ການຄົ້ນຄວ້າກະສິກຳ, ໂຄງລ່າງພື້ນຖານຊົນນະບົດ ແລະ ການບໍລິການສົ່ງເສີມ, ແລະ ສ້າງສະພາບແວດລ້ອມທີ່ເອື້ອອ□ານວຍໃຫ້ແກ່ພາກເອກະຊົນໃຫ້ມີຄວາມເຂັ້ມແຂງ (Wieck et al, 2014). ການລົງທຶນຂອງເອກະຊົນໃນ FAF ສາມາດເພີ່ມລາຍໄດ້ຈາກການສົ່ງອອກ, ເພີ່ມສະມັດຕະພາບການຜະລິດ, ສ້າງວຽກເຮັດງານທຳ ແລະ ສາມາດເຂົ້າເຖິງເຕັກໂນໂລຊີ, ທຶນ ແລະ ຕະຫຼາດໃໝ່ (Karlsson, 2014; Picard, et. al, 2017). ບົດແນະນຳ ແມ່ນສຸມໃສ່ແກ້ໄຂສິ່ງທ້າທາຍຈາກການລົງທຶນຂອງພາກເອກະຊົນ. ພາກເອກະຊົນກວມເອົາຊາວກະສິກອນຂະໜາດນ້ອຍ, SME ແລະ ນັກລົງທຶນເອກະຊົນຂະໜາດໃຫຍ່ ແລະ ລວມທັງແຫຼ່ງການລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ (Mirza, et al. 2014.[ii]).

ມີຄວາມສ່ຽງຫລາຍຢ່າງທີ່ກ່ຽວຂ້ອງກັບການລົງທຶນຂອງພາກເອກະຊົນ, ໂດຍສະເພາະການລົງທຶນຈາກຕ່າງປະເທດ. ຜົນປະ ໂຫຍດດ້ານການພັດທະນາບໍ່ແມ່ນຈະໄດ້ມາແບບອັດຕະໂນມັດ ແລະ ໃນອາຊີຕາເວັນອອກສ່ຽງໃຕ້ ຈະກ່ຽວຂ້ອງກັບ " ໂຍງໄຍ ທີ່ກ່ຽວພັນກັບຜົນປະໂຫຍດ ແລະ ການແກ່ງແຍ່ງທີ່ສະລັບຊັບຊ້ອນ" (Mirza et al, 2014; Shohibuddin et al, 2016)[iii]. ຖ້າເຮັດບໍ່ໄດ້ດີ, ການລົງທຶນຂອງພາກເອກະຊົນສາມາດເຮັດໃຫ້ເພີ່ມຄວາມບໍ່ເທົ່າທຽມກັນທີ່ມີຢູ່ແລ້ວ, ສົ່ງຜົນກະທົບ ຕໍ່ຊີວິດການເປັນຢູ່ຂອງຊາວກະສິກອນຂະໜາດນ້ອຍ ແລະ ຊາວພື້ນເມືອງ ແລະ ເຮັດໃຫ້ທີ່ດິນ, ນ້ຳ, ເນື້ອ

ດິນ, ປ່າໄມ້ ແລະ ຊັບພະຍາກອນ ທຳມະຊາດອື່ນໆຫລຸດລົງ (Karlsson, 2014; Picard et al, 2017[iv]). ແຕ່ຖ້າເຮັດໄດ້ດີ, ແລະ ເຊື່ອມເຂົ້າກັບເສດຖະກິດທ້ອງຖິ່ນ, ການລົງທຶນທີ່ເພີ່ມຂຶ້ນສາມາດຊ່ວຍສ້າງວຽກເຮັດງານທຳ ແລະ ສົ່ງເສີມການພັດທະນາເສດຖະກິດ (Karlsson, 2014; Picard. et al, 2017[v]). ທຸກພາກສ່ວນມີບົດບາດ ໃດໜຶ່ງໃນການຮັບປະກັນຜົນໄດ້ຮັບໃນທາງບວກ ແລະ ແຕ່ລະຄົນກໍປະເຊີນກັບບັນດາຄວາມສ່ຽງ ແລະ ສິ່ງທ້າທາຍ ທີ່ເປັນເອກະລັກ ສະເພາະຂອງໃຜມັນ ແຕ່ຈະມີຄວາມເຊື່ອມໂຍງກັນ.

ການລົງທຶນໃນ FAF ສ້າງສິ່ງທ້າທາຍ ສຳລັບ AMS ໃນ 6 ຂົງເຂດຫຼັກຄື: (1) ຄວາມໝັ້ນຄົງດ້ານສະບຽງອາຫານ, (2) ສິດຕໍ່ທີ່ດິນ, (3) ວຽກເຮັດງານທຳ ແລະ ຊີວິດການເປັນຢູ່, (4) ສະພາບແວດລ້ອມ, (5) ຄວາມສາມາດດ້ານເຕັກນິກ ແລະ ດ້ານສະຖາບັນ, ແລະ (6) ຄວາມລົ້ມເຫຼວຂອງໂຄງການ, ດ້ວຍບັນຫາກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການມີສ່ວນຮ່ວມຂອງຊາວໜຸ່ມ ໃນທຸກຂົງເຂດ.

### 4.1. ຄວາມໝັ້ນຄົງດ້ານສະບຽງອາຫານ

**ການລົງທຶນໃນ FAF ສາມາດນຳມາຊຶ່ງຜົນໄດ້ຮັບໃນທາງບວກຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ, ລວມທັງໂພຊະນາການ.** ການລົງທຶນ, ໂດຍສະເພາະຂອງຊາວກະສິກອນ ແລະ ລັດຖະບານ, ເຊິ່ງປັບປຸງສະມັດຕະພາບການຜະລິດກະສິກຳ, ສາມາດເພີ່ມຄວາມສາມາດໃນການຊື້ ແລະ ການມີອາຫານຢູ່ໃນຕະຫຼາດ (Liu, 2014[vi]). ການລົງທຶນດ້ານກະສິກຳ ຂະໜາດໃຫຍ່ທີ່ລວມເອົາ ຊາວກະສິກອນຂະໜາດນ້ອຍ ເປັນຜູ້ປູກ ຫຼື ລ້ຽງໃຫ້ ໄດ້ມີຜົນດີຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ , ໂດຍຜ່ານລາຍຮັບທີ່ສູງຂຶ້ນ. (Mirza et al, 2014). ນອກຈາກນັ້ນ, ການປັບປຸງຄວາມໜ້າເຊື່ອຖືຂອງຕ່ອງໂສ້ການສະໜອງໄດ້ເຮັດໃຫ້ຄວາມໝັ້ນຄົງດ້ານສະບຽງອາຫານ ມີຄວາມສະຖຽນຂຶ້ນ ສຳລັບປະຊາກອນໃນຕົວເມືອງເຊິ່ງໂດຍທົ່ວໄປແລ້ວບໍ່ໄດ້ປູກ ຫຼື ລ້ຽງເອົາເອງ. ແທ້ຈິງແລ້ວ, ການລົງທຶນຂະໜາດໃຫຍ່ ສາມາດມີຄວາມສຳຄັນຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານໃນຕົວເມືອງ, ໂດຍສະເພາະໃນ AMS ທີ່ເນື້ອທີ່ດິນປູກຝັງ ກຳລັງຫຼຸດລົງ ເນື່ອງຈາກການນຳໃຊ້ທີ່ດິນອຸດສາຫະກຳ ແລະ ທີ່ຢູ່ອາໄສ ທີ່ເພີ່ມຂຶ້ນ, ແລະ ໃນສະພາບທີ່ປະຊາກອນຂະຫຍາຍຕົວຢ່າງໄວວາ. ສິ່ງທ້າທາຍແມ່ນການຮັບປະກັນບໍ່ໃຫ້ຄວາມໝັ້ນຄົງດ້ານສະບຽງອາຫານ ໃນຕົວເມືອງ ມີຜົນກະທົບດ້ານລົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານໃນເຂດຊົນນະ ບົດ.

**ຖ້າເຮັດບໍ່ໄດ້ດີ, ການລົງທຶນໃນ FAF ສາມາດສ້າງຄວາມສ່ຽງຢ່າງຫຼວງຫຼາຍຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ.** ການນຳໃຊ້ທີ່ດິນ ສຳລັບປູກພືດທີ່ບໍ່ແມ່ນອາຫານ, ຫຼື ເພື່ອຜະຫຼິດອາຫານສົ່ງອອກເປັນຕົ້ນຕໍ ສາມາດເປັນສິ່ງທ້າທາຍຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານຂອງທ້ອງຖິ່ນ (UNCTAD, FAO & IFAD, 2010[vii]) ໂດຍສະເພາະໃນເຂດຊົນນະບົດຂອງ AMS ສ່ວນໃຫຍ່. ໃນຂະນະທີ່ການລົງທຶນສາມາດເພີ່ມການຜະລິດໃນປະເທດໃດໜຶ່ງ, ມັນອາດຈະຫັນທິດທາງອາຫານອອກຈາກຊຸມຊົນ ທ້ອງຖິ່ນບ່ອນທີ່ມີຄວາມຕ້ອງການຫຼາຍທີ່ສຸດ (Mirza et al, 2014). ການຍ້າຍ ແລະ ການຈັດສັນພູມລຳເນົາໃໝ່ ສາມາດກະທົບ ຕໍ່ຄວາມສາມາດຂອງຊຸມຊົນໃນການປູກ ຫຼື ລ້ຽງສິ່ງທີ່ເປັນອາຫານຂອງຕົນເອງ ແລະ ການເຂົ້າເຖິງແຫຼ່ງອາຫານຕາມຊິນເຄີຍ ແລະ ທີ່ເປັນພື້ນບ້ານ, ລວມທັງທີ່ດິນທີ່ເປັນທົ່ງຫຍ້າລ້ຽງສັດ ແລະ ແຫຼ່ງຊັບພະຍາກອນເພື່ອລ້ຽງຊີບອື່ນໆ ທີ່ມີຄວາມສຳຄັນຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ.

**ສິ່ງທ້າທາຍເພີ່ມເຕີມເກີດຂຶ້ນ ເມື່ອການລົງທຶນຂອງຕ່າງປະເທດໃນ FAF ຕິດພັນກັບຍຸດທະສາດ ຄວາມໝັ້ນຄົງ ດ້ານສະບຽງອາຫານຂອງປະເທດບ້ານຂອງຜູ້ລົງທຶນ.** ສິ່ງທ້າທາຍເຫຼົ່ານີ້ສາມາດຊົດເຊີຍໄດ້ໂດຍການກະຕຸ້ນລາຍໄດ້ຂອງຊາວກະສິກອນຈາກການປູກພືດສົ່ງອອກ ເຊິ່ງສາມາດ ນຳໃຊ້ເຂົ້າໃນການຊື້ອາຫານໃນທ້ອງຖິ່ນ. ຍົກຕົວຢ່າງມາເລເຊຍ ແລະ ໄທ ໄດ້ລົງທຶນຢ່າງຫຼວງຫຼາຍໃນ AMS ອື່ນໆ, ໂດຍສະເພາະແມ່ນ ຫວຽດນາມ ແລະ ຟີລິບປິນ, ເພື່ອສະໜອງຕະຫຼາດຂອງຕົນ (Fiedler & Iafrate, 2016). ການລົງທຶນຂອງຕ່າງປະເທດໃນ FAF ອາດຈະຊ່ວຍໃຫ້ບັນດາລັດເຈົ້າພາບສາມາດຄວບຄຸມການຜະລິດສຳລັບຕະຫຼາດພາຍໃນ ແລະ ຫຼຸດຜ່ອນຕົ້ນທຶນຂອງຜະລິດຕະພັນເຫຼົ່ານັ້ນໂດຍການຕັດພໍ່ຄ້າຄົນກາງອອກ. ມັນຍັງອາດສະໜອງແຫຼ່ງ ຊັບພະຍາກອນ ພືດອຸດສາຫະກຳທີ່ພຽງພໍເຊັ່ນ: ໄມ້, ຢາງພາລາ ແລະ ເຊື້ອໄຟຊີວະພາບ, ສຳລັບອຸດສະຫະກຳພາຍໃນປະເທດ (Schönweger & Üllenberg, 2009).

4.2. ສິດຕໍ່ທີ່ດິນ

**ຄວາມສ່ຽງທີ່ພົບເລື້ອຍທີ່ສຸດ ຈາກການລົງທຶນຂອງພາກເອກະຊົນຂະໜາດໃຫຍ່ ແມ່ນການຂັດແຍ້ງດ້ານທີ່ດິນ ທີ່ສົ່ງ ຜົນກະທົບຢ່າງຮ້າຍແຮງຕໍ່ທຸກພາກສ່ວນ, ໂດຍມີຜົນກະທົບທາງລົບເປັນພິເສດ ສໍາລັບຊຸມຊົນທ້ອງຖິ່ນ** (Fiedler & Iafrate, 2016).[viii] ຂໍ້ຂັດແຍ່ງກ່ຽວກັບທີ່ດິນແມ່ນຜົນກະທົບທາງລົບທີ່ພົ້ນເດັ່ນທີ່ສຸດທີ່ເກີດຂຶ້ນຈາກ 10 ການລົງທຶນຂະໜາດໃຫຍ່ ໃນທຸລະກິດກະສິກໍາຢູ່ AMS[2] (Mirza et al, 2014). ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈສາມາດເຮັດໃຫ້ຄົວເຮືອນສູນເສຍການເຂົ້າເຖິງທີ່ດິນຂອງຕົນທັງໝົດ, ແລະ ການກ□ານົດເຂດພື້ນທີ່ຂອງໂຄງການ ສາມາດຕັດການເຂົ້າເຖິງແຫຼ່ງຊັບພະຍາກອນທໍາມະຊາດ, ນໍ້າ ແລະ ແຫຼ່ງອາຫານການກິນຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ. ອີງການສົນທິສັນຍາຕ່າງໆ ຂອງສະຫະປະຊາຊາດຕິດຕາມຜົນກະທົບຂອງການຈັດຫາທີ່ດິນຂະໜາດໃຫຍ່ໃນ 4 AMS ພົບວ່າຜົນກະທົບດ້ານລົບໂດຍສະເພາະຕໍ່ປະຊາກອນທີ່ມີຄວາມສ່ຽງຈາກການຈໍາແນກ ແລະ ຄວາມດ້ອຍໂອກາດ; ກຸ່ມຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຊຸມຊົນຊົນນະບົດ, ແລະ ຊາວກະສິກອນຂະໜາດນ້ອຍ (Golay, 2015).[ix] ຂໍ້ຂັດແຍ່ງທີ່ດິນ ແລະ ຄວາມບໍ່ຫມັ້ນຄົງໃນການຄອບຄອງນໍາໃຊ້ ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ນັກລົງທຶນເຊັ່ນດຽວກັນ, ໃນບາງກໍລະນີ ພຶດຕິກໍາທີ່ມີແຮງຈູງໃຈ ເປັນຕົວກໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ຊຸມຊົນທ້ອງຖິ່ນ. ໃນແງ່ຂອງການສໍາປະທານປ່າໄມ້, ສະພາບແວດລ້ອມດ້ານນະໂຍບາຍຂອງລັດເຈົ້າພາບ ທີ່ ບໍ່ສົ່ງເສີມຄວາມໝັ້ນຄົງດ້ານສິດຄອບຄອງນໍາໃຊ້, ໃນກໍລະນີທີ່ດີທີ່ສຸດ ກໍຖືວ່າ ເປັນຕົວທ່ວງດຶງ ເຮັດໃຫ້ນັກລົງທຶນ ບໍ່ລົງທຶນໃນວິທີການຜະລິດທີ່ຍືນຍົງກວ່າ, ແຕ່ໃນກໍລະນີທີ່ຮ້າຍແຮງທີ່ສຸດ ກໍຈະເປັນການກະຕຸ້ນໃຫ້ນັກລົງທຶນ 'ຕັດ ແລະ ແລ່ນໜີ' ກ່ອນຈະສູນເສຍການສໍາປະທານ (Chan, 2016; Schönweger & Üllenberg, 2009).

**ຜົນກະທົບທາງລົບຈາກການສູນເສຍທີ່ດິນ ແລະ ການຂັດແຍ້ງ ແມ່ນຮ້າຍແຮງກວ່າ ໃນບັນດາປະເທດທີ່ມີເຂດຊົນນະບົດ ເປັນສ່ວນໃຫຍ່ ແລະ ເປັນບ່ອນທີ່ສິດທິຕໍ່ທີ່ດິນສ່ວນຫຼາຍແມ່ນບໍ່ເປັນທາງການ** (Liu, 2014; Sylvester & Phaophongsavath 2017[x]). ການອອກໃບຕາດິນ ແລະ ຄວາມບໍ່ເປັນທາງການ ແມ່ນມີຄວາມສະຫຼັບຊັບຊ້ອນ ຢູ່ໃນບັນດາປະເທດຫຼັງສົງຄາມ ທີ່ມີການສູນເສຍຂໍ້ມູນບັນທຶກທີ່ເປັນທາງການກ່ຽວກັບທີ່ດິນ ແລະ ມີການຍົກຍ້າຍຈັດສັນທີ່ກວ້າງຂວາງ (Chan, 2016)[xi]. ການສ້າງແຜນທີ່ຕາດິນ ແລະ ການອອກໃບຕາດິນເພື່ອປັບປຸງຄວາມໝັ້ນຄົງຂອງສິດຄອບຄອງທີ່ດິນ ແລະ ຫຼຸດຜ່ອນ ຄວາມຂັດແຍ້ງ ແມ່ນມີຄວາມສໍາຄັນເປັນພິເສດ (Mirza et al, 2015). ໃນການລົງທຶນດ້ານທີ່ດິນ ໃນບາງປະເທດ AMS ພົບວ່າ ຍັງມີການປຶກສາຫາລືທີ່ບໍ່ພຽງພໍ, ການຂາດຄວາມໂປ່ງໃສ ແລະ ການເປີດເຜີຍ, ແລະ ຄວາມລົ້ມເຫຼວໃນການໃຫ້ສະມາຊິກຊຸມຊົນທີ່ໄດ້ຮັບຜົນກະທົບທັງໝົດມີສ່ວນຮ່ວມຢ່າງເໝາະສົມ ໃນການວາງແຜນ ແລະ ການຕັດສິນໃຈ (Zhan, et al. 2015.[xii]). ທີ່ດິນຂອງຊົນພື້ນເມືອງ ແລະ ທີ່ດິນຂອງບັນພະບູລຸດ ແມ່ນມີຄວາມສ່ຽງເປັນພິເສດ (Tagliarino, 2016)[xiii] ກໍລະນີສຶກສາ ໃນ ການລົງທຶນດ້ານ FAF ໃນ AMS ໄດ້ພົບວ່າ ຄວາມສັບສົນທີ່ເກີດຈາກຄວາມຮັບຜິດຊອບທີ່ທັບຊ້ອນ ຂອງພາກລັດໃນລະດັບຕ່າງໆ (ໂຄງການບໍລິຫານລັດກ່ຽວກັບທີ່ດິນໃນພາກພື້ນແມ່ນໍ້າຂອງ, 2016),[xiv] ພ້ອມທັງການຂາດຄວາມໂປ່ງໃສ ແລະ ຄວາມບໍ່ສາມາດຄາດເດົາໄດ້ ສໍາລັບນັກລົງທຶນ ກ່ຽວກັບຂັ້ນຕອນໃນການຈັດຫາທີ່ດິນ (Sylvester & Phaophongsavath, 2017).

**ການປັບປຸງຄວາມໂປ່ງໃສ ແລະ ການປົກຄອງທີ່ດີກວ່າເກົ່າ ກໍາລັງເກີດຂຶ້ນເພື່ອຕ້ານກັບຜົນກະທົບທາງລົບ.** ບາງ AMS ກໍາລັງກ້າວໄປສູ່ຄວາມໂປ່ງໃສໃນການລົງທຶນຂະໜາດໃຫຍ່ ດ້ານ FAF, ໂດຍມາເລເຊຍໄດ້ເຜີຍແຜ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນເວັບໄຊທ໌ ຂອງກົມສິ່ງແວດລ້ອມ (Zhan et al, 2015). ກໍລະນີສຶກສາ ໃນລາວ ແລະ ກໍາປູເຈຍ ພົບວ່າການຂາດແຄນທີ່ດິນເພີ່ມຂຶ້ນ, ການແຂ່ງຂັນຂອງນັກລົງທຶນ ແລະ ຂະບວນການຮຽນຮູ້ຂອງພາກສ່ວນມີສ່ວນຮ່ວມໃນລະດັບນະໂຍບາຍ ທີ່ແຕກຕ່າງກັນ ແມ່ນນໍາໄປສູ່ການລົງທຶນ ທີ່ມີສ່ວນຮ່ວມ ຫລາຍຂຶ້ນ (Messerli, et al. 2015). ມີແນວໂນ້ມໃນການນໍາໃຊ້ເຕັກໂນໂລຊີ ເຊັ່ນ: ພາບຖ່າຍດາວທຽມ ແລະ ການຖ່າຍຮູບດ້ວຍ drone ເພື່ອຕິດຕາມກິດຈະກໍາທີ່ກ່ຽວຂ້ອງກັບການລົງທຶນ. ແຕ່ກໍຍັງມີການປັບປຸງ ທີ່ຕ້ອງໄດ້ເຮັດ ໃນດ້ານຄວາມໂປ່ງໃສ, ມາດຕະການຕ້ານການສໍ້ລາດບັງຫຼວງ ແລະ ການປົກຄອງທີ່ດີ ໃນການລົງທຶນດ້ານ FAF ໃນບາງ AMS.

---

[2] ກໍາປູເຈຍ, ຫວຽດນາມ, ອິນໂດເນເຊຍ, ມາເລເຊຍ ແລະ ສປປ ລາວ

4.3. ວຽກເຮັດງານທຳ ແລະ -ຊີວິດການເປັນຢູ່

**ວຽກ ແລະ ການສ້າງຊີວິດການເປັນຢູ່ ແມ່ນ ໜຶ່ງ ໃນຜົນປະໂຫຍດທີ່ສຳຄັນທີ່ສຸດຈາກການລົງທຶນດ້ານກະສິກຳ ຂະໜາດໃຫຍ່ ໃນ FAF.** ການລົງທຶນດ້ານກະສິກຳ ຂະໜາດໃຫຍ່ 10 ແຫ່ງ ໃນ 5 AMS ພົບວ່າການສ້າງວຽກເຮັດງານທຳ ຄືຜົນປະໂຫຍດທີ່ຖືກກ່າວເຖິງຫຼາຍທີ່ສຸດ, ແລະ ບັນດາໂຄງການຕ່າງໆ ໄດ້ຈ້າງແຮງງານໂດຍກົງປະມານ 7,000 ຄົນ (Mirza et al, 2014). ຫຼາຍໆວຽກເຫຼົ່ານີ້ໄດ້ຈ່າຍຄ່າແຮງງານທີ່ສູງກວ່າຕະຫຼາດແຮງງານທ້ອງຖິ່ນ. ທີ່ສຳຄັນ, ການສ້າງວຽກເຮັດງານທຳ ບໍ່ໄດ້ຕິດພັນກັບຂະໜາດຂອງທີ່ດິນ ແຕ່ຈະຕິດພັນກັບຮູບແບບທຸລະກິດຫຼາຍກວ່າ. ການລົງທຶນທີ່ມີການສ້າງໂຮງງານປຸງແຕ່ງ ຈະສ້າງວຽກເຮັດງານທຳໄດ້ຫລາຍກວ່າ ເມື່ອທຽບຕໍ່ເຮັກຕາ (Zhan et al, 2015).

**ແຕ່ວ່າບໍ່ແມ່ນວຽກທັງໝົດຈະໝັ້ນຄົງ ແລະ ໄດ້ຮັບຄ່າຈ້າງເປັນຢ່າງດີ, ແລະ ວຽກເຫຼົ່ານັ້ນກໍ ບໍ່ໄດ້ຖືກແບ່ງປັນຢ່າງເທົ່າທຽມກັນລະຫວ່າງຊ າຍ ແລະ ຍິງ.** ຍັງມີຊ່ອງຫວ່າງ ດ້ານບົດບາດຍິງຊາຍທີ່ສຳຄັນ ຢູ່ໃນບັນດາການລົງທຶນທຸລະກິດດ້ານກະສິກຳທີ່ໄດ້ຖືກ ຄົ້ນຄວ້າ ໃນພາກພື້ນອາຊຽນ. ມີພຽງແຕ່ປະມານໜຶ່ງສ່ວນສາມຂອງວຽກເທົ່ານັ້ນທີ່ຕົກເປັນຂອງແມ່ຍິງ, ແລະ ວຽກເຫຼົ່ານີ້ ສ່ວນຫຼາຍແມ່ນວຽກທີ່ບໍ່ເປັນທາງການ, ຊົ່ວຄາວ, ຫຼື ຕາມລະດູການ (Zhan et al, 2015). ຄວາມຍືນຍົງຂອງວຽກກໍ່ຍັງເປັນ ຄຳຖາມ; ໃນຫຼາຍໆ ກໍລະນີສຶກສາ, ຈຳນວນວຽກທີ່ສ້າງ ແມ່ນຫຼຸດລົງຕາມການເວລາ ແລະ ຕໍ່າກ່ວາຈຳນວນ ທີ່ນັກລົງທຶນໄດ້ສັນຍາໄວ້ໃນເບື້ອງຕົ້ນ (FAO, 2012). ສຳລັບນັກລົງທຶນຕ່າງປະເທດ, ຕຳແໜ່ງ ຜູ້ຈັດການມັກຈະເປັນຂອງ ຄົນຕ່າງປະເທດ ຫຼື ຄົນທີ່ມາຈາກນອກຊຸມຊົນທ້ອງຖິ່ນ (Liu, 2014). ໃນບາງກໍລະນີ, ວຽກອອກແຮງງານໃນສວນຢາງພາລາໄດ້ຖືກມອບໃຫ້ແຮງງານອົບພະຍົບຈາກເຂດນອກທ້ອງຖິ່ນ ທີ່ເຫັນວ່າ ມີປະສິດທິພາບຫຼາຍກວ່າ, ເຊິ່ງກໍ່ໃຫ້ເກີດຄວາມເຄັ່ງຕຶງກັບຊຸມຊົນທ້ອງຖິ່ນ (Gironde & Senties Portilla[xvi], 2015; Schönweger & Üllenberg, 2009).

**ໂຄງການແບບ ສັນຍາກະສິກຳ (Contract Farming) ສາມາດປັບປຸງຊີວິດການເປັນຢູ່ ໂດຍປ່ອຍໃຫ້ຊາວກະສິກອນຄວບຄຸມທີ່ດິນຂອງເຂົາເຈົ້າເອງ, ແຕ່ອີກຄັ້ງໜຶ່ງ ຜົນປະໂຫຍດກໍຍັງ ບໍ່ໄດ້ຖືກແຈກຢາຍຢ່າງເທົ່າທຽມກັນ ລະຫວ່າງຊາຍ ແລະ ຍິງ.** ບັນດາຮູບແບບທຸລະກິດທີ່ມີຊາວກະສິກອນຂະໜາດນ້ອຍເປັນຄູ່ຮ່ວມທຸລະກິດ ສາມາດຫຼຸດຜ່ອນຄວາມສ່ຽງ ແລະ ເຮັດໃຫ້ເກີດປະໂຫຍດສູງສຸດຈາກການລົງທຶນ ດ້ານ FAF, ສ້າງໂອກາດສ້າງລາຍໄດ້ ແລະ ເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ. ຍົກຕົວຢ່າງ, ນັກລົງທຶນດ້ານກະສິກຳ ຂະໜາດໃຫຍ່ 11 ແຫ່ງໃນ AMS ໄດ້ເຮັດສັນຍາກັບຫຼາຍກວ່າ 30,000 ຜູ້ສັນຍາຮັບປູກ ຫຼື ລ້ຽງ(outgrowers) ພາຍໃນຮູບແບບທຸລະກິດທີ່ທົ່ວເຖິງກວ່າເກົ່າ (Mirza et al, 2014). ການລົງທຶນເຫລົ່ານີ້ໄດ້ຮັບຜົນດີຍ້ອນວ່າມີຜູ້ຊື້ທີ່ໜ້າເຊື່ອຖືສຳລັບຜົນຜະລິດຂອງຊາວກະສິກອນທ້ອງຖິ່ນ ໄດ້ປະ ກອບສ່ວນ ໃນທາງບວກເພື່ອເຮັດໃຫ້ລາຍໄດ້ໃນຊົນນະບົດເພີ່ມຂຶ້ນ. ຜູ້ສັນຍາຮັບປູກ ຫຼື ລ້ຽງໃຫ້ ໂດຍທົ່ວໄປຄິດວ່າພວກກ່ຽວໄດ້ຮັບລາຄາທີ່ດີກວ່າສຳລັບຜະລິດຕະພັນ ແລະ ໄດ້ຮັບການຝຶກອົບຮົມທີ່ມີປະໂຫຍດ ແລະ ການສະຫນັບສະຫນູນດ້ານວິຊາການຈາກນັກລົງທຶນ. ໃນອີກດ້ານນຶ່ງ, ການເລືອກເອົາຊາວກະສິກອນທີ່ໃຫຍ່ທີ່ສຸດ ສຳລັບສັນຍາ ສາມາດນຳໄປສູ່ຄວາມບໍ່ສະເໝີພາບ ແລະ ຄວາມເຄັ່ງຕຶງໃນຊຸມຊົນ. ໃນຫລາຍໆກໍລະນີຜົນໄດ້ຮັບບົດບາດຍິງຊາຍແມ່ນ ໜ້າຜິດຫວັງ ; ໃນບັນດາຜູ້ສັນຍາຮັບປູກ ຫຼື ລ້ຽງ ມີແມ່ຍິງ ຕໍ່າກວ່າ 5 ສ່ວນຮ້ອຍ (Mirza et al, 2014; Smaller et al, 2015[xvii]). ນອກຈາກນັ້ນ, ຄວາມບໍ່ດຸ່ນດ່ຽງດ້ານອຳນາດລະຫວ່າງຜູ້ຜະລິດ ແລະ ຜູ້ຊື້ຍັງຄົງມີຢູ່, ມີການແຈກຢາຍຄວາມສ່ຽງ ທີ່ບໍ່ເທົ່າທຽມກັນ ແລະ ຜູ້ຜະລິດມັກຈະມີ ອຳນາດຕໍ່ລອງທີ່ອ່ອນແອກວ່າ.

ຍິ່ງໄປກວ່ານັ້ນ, **ໂອກາດໃນການເຮັດສັນຍາກະສິກຳ ມາພ້ອມກັບຄວາມສ່ຽງ ສຳລັບຊາວກະສິກອນ, ໂດຍສະເພາະ ສຳລັບພືດທີ່ສຳຄັນ ຂອງອາຊຽນ.** ການເໜັງຕີງຂອງລາຄາຂອງພືດອຸດສະຫະກ□າ ທີ່ມີການຊື້ຂາຍສາມາດເຮັດໃຫ້ຄົວເຮືອນກະສິກ□າທີ່ມີສັນຍາສ່ຽງຕໍ່ການຕົກຕໍ່າ ຂອງລາຄາ, ເຊັ່ນ ລາຄາຢາງພາລາຫຼຸດລົງໃນປີ 2012 (Sylvester & Phaophongsavath 2017). ພືດຊະນິດນີ້ມີໄລຍະຍາວລະຫວ່າງການປູກ ແລະ ການເກັບກ່ຽວ, ສະນັ້ນຊາວກະສິກອນຕ້ອງສ່ຽງຕໍ່ເຫດການຕ່າງໆເຊັ່ນ: ໄຟ, ພະຍາດ, ແລະ ດິນຟ້າອາກາດ, ທີ່ຈະມາທຳລາຍກ່ອນທີ່ພວກມັນຈະເຕີບໃຫຍ່ (Schönweger & Üllenberg, 2009). ການກຳນົດລາຄາທີ່ບໍ່ຊັດເຈນ, ການປະເມີນຄຸນນະພາບ ແລະ ການຊັກຊ້າໃນການປຸງແຕ່ງ ຍັງສາມາດເຮັດໃຫ້ຊາວກະສິກອນເສຍປຽບ. ພືດອາຊຽນທີ່ສຳຄັນຈຳນວນໜຶ່ງ - ຢາງ, ນ້ຳຕານ, ແລະ ນ□້າມັນປາມ - ຕ້ອງໄດ້ຮັບການປຸງແຕ່ງຢ່າງໄວວາຫຼັງຈາກເກັບກ່ຽວ, ເຮັດໃຫ້ຊາວກະສິກອນ ຕົກຢູ່ໃນສະພາບທີ່ຕ້ອງຂຶ້ນກັບຄວາມເມດຕາປານີຈາກນັກລົງທຶນ ໃຫ້ມາເກັບຊື້ທັນເວລາ ແລະ ມີຄວາມສາມາດໃນການເກັບຮັກສາ ແລະ ປຸງແຕ່ງຢ່າງພຽງພໍ (Zhan et al, 2015). ໃນຂະນະດຽວກັນ, ແມ່ຍິງເຮັດວຽກເກືອບທັງໝົດ ຕາມສັນຍາກະສິກຳ, ແຕ່ໂດຍປົກກະຕິແລ້ວ ສັນຍາແມ່ນເຊັນໂດຍພວກຜູ້ຊາຍ ທີ່ເປັນຫົວໜ້າຄອບຄົວ (Daley, 2013[xviii]), ແລະ ພືດທີ່ປູກຕາມສັນຍາ ສາມາດມາປ່ຽນແທນ ພືດອາຫານທີ່ແມ່ຍິງປູກເພື່ອລ້ຽງ

ຄອບຄົວ (Vermeulen & Cotula 2010[xix]; Eaton & Shepherd 2001.[xx]). ແນວໃດກໍ່ຕາມສັນຍາກະສິກຳ ເປັນແນວຄິດສາມາດໄດ້ຮັບການປັບປຸງຕື່ມອີກ, ລວມທັງການມີສ່ວນຮ່ວມໃນລະດັບຕ່າງໆ, 'ການລົງທຶນຮ່ວມ' ແລະ 'ການແບ່ງປັນຄວາມສ່ຽງ'. ຖ້າມີການສົ່ງເສີມການມີສ່ວນຮ່ວມທີ່ເຂັ້ມແຂງ, ບັນຫາຕ່າງໆເຊັ່ນ: ການຈ້າງງານລະຫວ່າງເພດສາມາດແກ້ໄຂໄດ້.

### 4.4. ການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ

**ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ ແລະ ເຫດການສະເທືອນຂັວນ ຕ່າງໆ ທີ່ຕາມມາແມ່ນເກີດຂຶ້ນ ໃນລະດັບໂລກໂລກ ແລະ ທ້ອງຖິ່ນ, ໃນທັນທີ ແລະ ໄລຍະຍາວ; ມັນກະທົບຕໍ່ທຸກຂະແໜງການ, ລວມທັງ FAF; ແລະ ພວກມັນບໍ່ເຄົາລົບຊາຍແດນ ຫຼື ອົງກອນໃດໆ ຂອງມະນຸດ.** ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ເພື່ອຊ່ວຍຫຼຸດຜ່ອນຜົນກະທົບເຫຼົ່ານັ້ນ, ແລະ ປັບຕົວເຂົ້າກັບມັນ, ຮຽກຮ້ອງໃຫ້ມີປະຕິບັດການຮ່ວມມືທີ່ບໍ່ເຄີຍມີມາກ່ອນ ໃນພາກສ່ວນຂອງລັດຖະບານ ແລະ ຜູ້ວາງນະໂຍບາຍ (ທ້ອງຖິ່ນ, ພາກພື້ນ ແລະ ສາກົນ), ນັກລົງທຶນ (ພາຍໃນ ແລະ ຕ່າງປະເທດ), ຊຸມຊົນ ແລະ ພາກສ່ວນມີສ່ວນຮ່ວມອື່ນໆ.

**ການລົງທືນໃນດ້ານ FAF ສາມາດທຳລາຍສະພາບແວດລ້ອມ ໃນທ້ອງຖິ່ນໂດຍການໃຊ້ຊັບພະຍາກອນທຳມະຊາດ ຫຼາຍເກີນໄປ.** ການຕັດໄມ້ ແລະ ຖາງປ່າເພື່ອຫັນປ່ຽນມາໃຊ້ ໃນການກະສິກຳແມ່ນສາເຫດຕົ້ນຕໍ ຂອງການເຊື່ອມໂຊມຂອງດິນ ແລະ ນ້ຳ, ການສູນເສຍຊີວະນາໆພັນ ແລະ ການປ່ອຍອາຍກາກບອນ. ມູນຄ່າຂອງໄມ້ທ່ອນ ສຳລັບການຂາຍທັນທີພາຍໃນພາກພື້ນ ມັກຈະມີລາຄາສູງ, ເຊິ່ງໄດ້ດຶງດູດນັກລົງທຶນ ແຕ່ພວກເຂົາເຫຼົ່ານັ້ນ ບໍ່ໄດ້ສືບຕໍ່ພັດທະນາທີ່ດິນ ຫຼັງຈາກຕັດໄມ້ອອກແລ້ວ, ເປັນການສ້າງຄວາມສູນເສຍໃຫ້ຊຸມຊົນທ້ອງຖິ່ນ (Zhan et al, 2015; Chan, 2016).

**ເຖິງວ່າຈະມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ, ແຕ່ກໍ່ຍັງບໍ່ມີຄວາມເອົາໃຈໃສ່ຢ່າງພຽງພໍຕໍ່ການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ການປະມົງຢ່າງມີປະສິດທິຜົນ. ຄ່ານິຍົມໃນຕະຫລາດ ສຳລັບຜະລິດຕະພັນປອດສານພິດ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຮັບການຢັ້ງຢືນ ກຳລັງຂັບເຄື່ອນການລົງທຶນໃນການປະຕິບັດການຜະລິດແບບຍືນຍົງ.** ຄວາມພະຍາຍາມ ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງຄວາມອຸດົມສົມບູນຂອງດິນ, ປ່າໄມ້ ແລະ ການປະມົງໃນໄລຍະຍາວ ຄືການພິຈາລະນາຫຼັກ. ການຜະລິດເປັນສິນຄ້າຂະໜາດໃຫຍ່ຂອງພືດ ໜຶ່ງ ຫຼື ສອງຊະນິດ ຕ້ອງໃຊ້ສານເຄມີຫຼາຍ, ເຊິ່ງປະກອບສ່ວນຕໍ່ການເຊື່ອມໂຊມຂອງດິນ ແລະ ນ້ຳ ແລະ ການສູນເສຍຊີວະນາໆພັນ ຜ່ານການສະສົມຂອງສານເຄມີ, ການສິດພົ່ນທາງອາກາດ ແລະ ການປົນເປື້ອນຂອງນ້ຳ (Mirza et al, 2014). ແລະ ມັນບໍ່ໄດ້ຖືກຈ□າກັດສະເພາະແຕ່ກິດຈະການຂະໜາດໃຫຍ່ (ADB, 2014) [xxi]. ນັກລົງທຶນຄົນໜຶ່ງໃນປະເທດ ກຳປູເຈຍໄດ້ສ້າງ ຕົວແບບດ້ານກະສິກຳ - ທີ່ສອດຄ່ອງກັບມູນນິທິສາກົນ ເພື່ອການກະສິກຳແບບອິນຊີ ແລະ ຂໍ້ກຳນົດຂອງ ສຳນັກງານຮັບຮອງມາດຕະຖານກະສິກຳແບບອິນຊີ ຂອງອິນເດຍ, ເຊິ່ງບໍ່ໃຊ້ສານເຄມີກະເສດ ຫຼື ປຸຍເຄມີ, ໃຊ້ການກຳຈັດວັດສະພືດດ້ວຍມື ແລະ ການໄຖພວນດິນຂັ້ນຕ່ຳ (Mirza et al, 2014). ເຖິງຢ່າງໃດກໍ່ຕາມ, ໃບຮັບຮອງມາດຕະຖານ ອາດມີລາຄາແພງ ສຳລັບຊາວກະສິກອນຂະໜາດນ້ອຍ ແລະ SME, ລາຄາພິເສດທີ່ຈ່າຍ ຍັງບໍ່ສູງພໍທີ່ຈະເປັນແຮງກະຕຸ້ນທີ່ພຽງພໍ, ແລະ ຈະແມ່ນບໍລິສັດ, ບໍ່ແມ່ນຊາວກະສິກອນຂະໜາດນ້ອຍ, ເປັນຜູ້ທີ່ສາມາດເກັບ ກຳສ່ວນແບ່ງສ່ວນໃຫຍ່ຂອງມູນຄ່າໄດ້.

### 4.5. ຄວາມສາມາດດ້ານວິຊາການ ແລະ ດ້ານສະຖາບັນ

ໜຶ່ງໃນມາດຕະການສຳຄັນທີ່ລັດຖະບານສາມາດປະຕິບັດເພື່ອກຳນົດ ແລະ ຫຼຸດຜ່ອນຄວາມສ່ຽງ ທີ່ໄດ້ກ່າວມາຂ້າງເທິງແມ່ນການກວດຜ່ານ ບັນດານັກລົງທຶນ ແລະ ບົດສະເໜີການລົງທຶນຂອງເຂົາເຈົ້າ. **ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນການກວດຜ່ານ ແລະ ຄັດເລືອກນັກລົງທຶນໃນບາງ AMS ພົບວ່າເຮັດແບບຟ້າວຟັ່ງ ແລະ ຜິວເຜີນ.** ສ່ວນໜຶ່ງ ແມ່ນຍ້ອນວ່າ ການກວດຜ່ານທາງດ້ານການເງິນ ແລະ ເຕັກນິກ ທີ່ສົມບູນແບບ ຮຽກຮ້ອງໃຫ້ມີຄວາມຊ່ຽວຊານສະເພາະດ້ານ (ລວມທັງທັກສະການເຈລະຈາ ແບບຊ່ອງໜ້າກັບນັກລົງທຶນ), ມີຊັບພະຍາກອນມະນຸດ ແລະ ການປະສານງານລະຫວ່າງອົງກອນຕ່າງໆຂອງລັດຖະບານ, ເຊິ່ງອາດຈະຍັງຂາດ ຢູ່ໃນບາງ AMS. ບັນດາອົງກອນທີ່ຮັບຜິດຊອບໃນການກວດຜ່ານ ຍັງອາດຈະຕົກຢູ່ພາຍໃຕ້ຄວາມກົດດັນທາງການເມືອງ ແລະ ອິດທິພົນ ຂອງນະໂຍບາຍແບບເກື້ອກູນ“ ເຮັດໃຫ້ມັນແລ້ວໄປ”. ປະເດັນນີ້

ໂດຍສະເພາະແລ້ວ ອາດເປັນບັນຫາໃນເວລາທີ່ການຄັດເລືອກບໍ່ມີຄວາມໂປ່ງໃສ ຫຼື ບໍ່ທົ່ວເຖິງ (ບໍ່ລວມເອົາພາກສ່ວນມີສ່ວນຮ່ວມ). ນອກຈາກນັ້ນ, ລັດຖະບານອາດຈະເນັ້ນ ການດຶງດູດການລົງທຶນ, ແຕ່ຕ້ອງປະຕິບັດໄດ້ຄວາມສົມດຸນລະຫວ່າງການດຶງດູດ ແລະ ການຄັດເລືອກທີ່ມີປະສິດທິຜົນ.

**ການຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນ FAF ເພື່ອຮັບປະກັນຄວາມສອດຄ່ອງກັບສັນຍາການລົງທຶນ ແລະ ກົດໝາຍ ທ້ອງຖິ່ນກໍ່ແມ່ນສິ່ງທ້າທາຍທີ່ສຳຄັນ ສຳລັບປະເທດເຈົ້າພາບ.** ການຕິດຕາມກວດກາທີ່ບໍ່ພຽງພໍສາມາດ ໝາຍຄວາມວ່າ ລັດຖະບານ ຈະບໍ່ເຫັນສັນຍານເຕືອນລ່ວງໜ້າ ກ່ຽວກັບການລົງທຶນທີ່ລົ້ມເຫລວ ທີ່ຈຳເປັນຕ້ອງໄດ້ແກ້ໄຂ ຫຼື ລົງໂທດ, ຫຼື ລົ້ມເຫລວໃນການສັງເກດເຫັນ ການປ່ຽນແປງທີ່ບໍ່ໄດ້ຮັບການອະນຸມັດ, ເຊັ່ນ ການປູກພືດຊະນິດອື່ນ ຫຼື ການປັບປ່ຽນແຜນທຸລະກິດ (ທະນາຄານໂລກ/UNCTAD). **ການຕິດຕາມກວດກາຂອງລັດຖະບານ ມັກຈະບໍ່ພຽງພໍ** ໃນການປະເມີນຢ່າງເໝາະສົມ ກ່ຽວກັບຄວາມສອດຄ່ອງ ຂອງນັກລົງທຶນ ກັບພັນທະຕາມສັນຍາ ແລະ ຕາມກົດໝາຍຂອງຕົນ. ການກວດກາກິດຈະກຳ ການລົງທຶນມັກຈະສຸມໃສ່ເປົ້າໝາຍການຜະລິດ, ແຕ່ມີການຕິດຕາມກວດກາທີ່ຈຳກັດກ່ຽວກັບຜົນກະທົບດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຂອງການລົງທຶນ (Mirza et al, 2014). ອຳນາດທີ່ທັບຊ້ອນກັນລະຫວ່າງພະແນກການຂອງລັດຖະບານ ຍັງສາມາດສົ່ງຜົນໃຫ້ ພັນທະໃນການຕິດຕາມກວດກາ "ຕົກເຮ່ຍໄປຕາມຊ່ອງຫວ່າງ" (Chan, 2016). ການຕິດຕາມກວດກາ ບັນດາໂຄງການລົງທຶນຢ່າງຕໍ່ເນື່ອງ ແລະ ມີປະສິດທິຜົນ ແມ່ນຕ້ອງໃຊ້ຊັບພະຍາກອນຫຼາຍ ແລະ ອາດຈະໄດ້ຮັບບຸລິມະສິດຕ່ຳໂດຍບັນດາລັດຖະບານ (ADB, 2014).

4.6. ຄວາມລົ້ມເຫຼວຂອງໂຄງການ ແລະ ສັນຍາລະຫວ່າງລັດ - ນັກລົງທຶນ

**'ເປັນວຽກທີ່ຫຍຸ້ງຍາກທີ່ຈະເຮັດໃຫ້ການລົງທຶນດ້ານກະສິກຳຂະໜາດໃຫຍ່ປະສົບຜົນສຳເລັດ, ໂດຍສະເພາະໃນບໍລິບົດຂອງປະເທດທີ່ກຳລັງພັດທະນາ'** (Mirza et. al, 2015, p.17) ແຕ່ຄວາມສຳເລັດດ້ານການເງິນ ແລະ ການດຳເນີນງານແມ່ນມີຄວາມສຳຄັນ ເພື່ອທີ່ ການລົງທຶນ ໃນດ້ານ FAF ຈະສາມາດບັນລຸ ຜົນ ຮັບທາງບວກດ້ານການພັດທະນາ. ຍິ່ງໄປກວ່ານັ້ນ, ການລົງທຶນດ້ານ FAF ມີແນວໂນ້ມທີ່ຈະໃຊ້ເວລາດົນນານ ເພື່ອທີ່ຈະມີກະແສເງິນສົດເປັນບວກ ເມື່ອທຽບກັບຂະແໜງການອື່ນໆ. ໂດຍປົກກະຕິ, ນັກລົງທຶນທີ່ປະສົບຜົນ ສຳ ເລັດຫຼາຍກວ່າ ຈະແມ່ນນັກລົງທຶນທີ່ມີປະສົບການ, ມີການເງິນທີ່ດີ ແລະ ມີຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບຕະຫຼາດເປົ້າໝາຍຂອງຕົນ. ເຖິງຢ່າງໃດກໍ່ຕາມ, ຄວາມລົ້ມເຫຼວຂອງໂຄງການ ສາມາດເປັນການ ສູນເສຍ-ສູນເສຍ-ສູນເສຍ ສຳລັບຊຸມຊົນທ້ອງຖິ່ນ, ນັກລົງທຶນ ແລະ ປະເທດເຈົ້າພາບ. ບົດແນະນຳຈະຊ່ວຍໃນການແກ້ໄຂຄວາມສ່ຽງນີ້. ອັດຕາສ່ວນທີ່ສຳຄັນຂອງບັນດາການລົງທຶນຂອງອາຊຽນ ໃນການສຶກສາທີ່ກ່າວມາ ຂ້າງເທິງນັ້ນ ແມ່ນບໍ່ມີຜົນກຳໄລ ຫຼື ມີຄວາມລ່າຊ້າ ໃນກຳນົດເວລາ ຍ້ອນສິ່ງທ້າທາຍໃນການດຳເນີນງານ ແລະ ການເງິນເຊັ່ນ: ຄວາມຫຍຸ້ງຍາກໃນການເຂົ້າເຖິງການເງິນ ແລະ ທຶນໝູນວຽນ, ຖະໜົນບໍ່ດີຈຳກັດການເຂົ້າເຖິງຕະຫຼາດ ແລະ ສິ່ງອຳນວຍຄວາມສະດວກອື່ນ, ບັນຫາດ້ານຊັບພະຍາກອນມະນຸດ ແລະ ບັນຫາຄວາມເປັນໄປໄດ້ທາງດ້ານວິຊາການ ເຊັ່ນ ດິນບໍ່ແທດເໝາະ (Mirza et al, 2015). ຄວາມສ່ຽງດ້ານຊື່ສຽງ ສຳລັບນັກລົງທຶນເອກະຊົນທີ່ຖືກມອງວ່າ ມີສ່ວນຮ່ວມໃນການ "ຍຶດເອົາທີ່ດິນ" ແມ່ນກ□າລັງເພີ່ມຂຶ້ນ, ຍ້ອນວ່າຕ່ອງໂສ້ການສະໜອງທົ່ວໂລກ ມີຄວາມໂປ່ງໃສເພີ່ມຂຶ້ນ ລວມທັງສິນຄ້າສຳຄັນຕ່າງໆ ຂອງອາຊຽນເຊັ່ນ: ນ້ຳມັນປາມ, ໄມ້, ນ້ຳຕານ, ຢາງພາລາ ແລະ ສາລີ (Dwyer, Polack & So, 2015)[xxii].

ໃນບ່ອນທີ່ການຍົກຍ້າຍຈັດສັນເກີດຂຶ້ນ ເປັນສິ່ງສຳຄັນທີ່ວ່າສິດ ໃນການຍິນຍອມ ແບບມີອິດສະລະ, ໄດ້ຮັບຂໍ້ມູນ ລ່ວງໜ້າ (FPIC) ແມ່ນຖືກຮັບຮອງ. ປະເດັນນີ້ ອະນຸຍາດໃຫ້ຊຸມຊົນຍອມຮັບ ຫຼື ບໍ່ຍອມຮັບ ຕໍ່ໂຄງການທີ່ອາດຈະສົ່ງຜົນກະທົບຕໍ່ພວກເຂົາ ຫຼື ຕໍ່ດິນແດນຂອງພວກເຂົາ. ປະຈຸບັນ, ສິດດັ່ງກ່າວ ກ່ຽວພັນກັບຊົນເຜົ່າພື້ນເມືອງ ແລະ ໄດ້ຮັບການຍອມຮັບ ໃນຖະແຫຼງການຂອງສະຫະປະຊາຊາດວ່າດ້ວຍສິດທິຂອງຄົນພື້ນເມືອງ (UNDRIP).

ກົດໝາຍ ພາຍໃນປະເທດທີ່ຖືກບັງຄັບໃຊ້ຢ່າງຖືກຕ້ອງ ແມ່ນວິທີທີ່ດີທີ່ສຸດ ສໍາລັບລັດຖະບານ ເພື່ອຊ່ວຍໃຫ້ບັນລຸ ຜົນກະທົບໃນທາງບວກຂອງການລົງທຶນໃນດ້ານ FAF, ແຕ່ໃນພາກປະຕິບັດ, **ສັນຍາລະຫວ່າງລັດ ແລະ ນັກລົງທຶນ, ເຊິ່ງເອີ້ນວ່າ ສັນຍານັກລົງທຶນ-ລັດ, ມີບົດບາດສໍາຄັນໃນ AMS.** ໂດຍສະເພາະ ແມ່ນໃນປະເທດ ກໍາ ລັງພັດທະນາ ບ່ອນທີ່ກົດໝາຍພາຍໃນທີ່ຈໍາເປັນອາດຈະບໍ່ມີ ຫຼື ຍັງບໍ່ມີລາຍລະອຽດພຽງພໍ (Smaller, 2014) ຫຼື ໃນບ່ອນທີ່ບໍ່ມີຄວາມສາມາດພຽງພໍໃນການຕິດຕາມ ແລະ ບັງຄັບໃຊ້ການປະຕິບັດຕາມກົດໝາຍທີ່ມີຢູ່. ປະເທດເຈົ້າພາບ ອາດຈະຂາດທັກສະທາງດ້ານກົດໝາຍ ແລະ ຄວາມສາມາດໃນການເຈລະຈາ ເພື່ອຮັບປະກັນໃຫ້ພວກເຂົາໄດ້ເຮັດສັນຍາທີ່ມີຄວາມເລິກເຊິ່ງ ແລະ ຄຸນນະພາບພຽງພໍ ເພື່ອປົກປ້ອງຜົນປະໂຫຍດຂອງລັດຖະບານ, ຊຸມຊົນທ້ອງຖິ່ນ ແລະ ນັກລົງທຶນ. ປະໂຫຍກທີ່ເປັນບັນຫາເປັນພິເສດທີ່ນັກລົງທຶນຕ່າງປະເທດມັກຈະໃຊ້ແມ່ນ ການຍັນຍັດໃຫ້ມີ"ສະຖຽນລະພາບ", ເຊິ່ງເຮັດໃຫ້ກົດໝາຍ ພາຍໃນປະເທດຕ້ອງຖືກແຊ່ແຂງ ໃນເວລາທີ່ ເຊັນສັນຍາກັບນັກລົງທຶນລາຍນັ້ນ ((Smaller, 2014). ປະໂຫຍກດັ່ງກ່າວອາດຈະຍົກເວັ້ນນັກລົງທຶນລາຍນັ້ນ ຈາກການນໍາໃຊ້ກົດໝາຍໃໝ່ ຫຼື ອາດຈະຮຽກຮ້ອງໃຫ້ລັດຖະບານທົດແທນຄ່າເສຍຫາຍທາງດ້ານການເງິນ ທີ່ເກີດຂຶ້ນຈາກການນໍາໃຊ້ກົດໝາຍໃໝ່. ປະເດັນນີ້ອາດຈະເຖິງ ມີມາດຕະການດ້ານສິ່ງແວດລ້ອມໃໝ່ ແລະ ການເພີ່ມຄ່າແຮງງານຂັ້ນຕໍ່າ (Smaller, 2014).

ໃນທີ່ສຸດ, ໃນຫຼາຍໆກໍລະນີ ຍັງຂາດກົນໄກການຮ້ອງທຸກສໍາລັບຊຸມຊົນທ້ອງຖິ່ນ ໃນການລົງທຶນຂະໜາດໃຫຍ່ ແລະ ຊຸມຊົນກໍ່ບໍ່ຮູ້ວ່າ ຈະຍົກບັນຫາຄວາມກັງວົນ ຫຼື ຊອກຫາວິທີແກ້ໄຂບັນຫາ ຄືແນວໃດ. ນອກຈາກນັ້ນ, ໃນໄລຍະເລີ່ມຕົ້ນຂອງການລົງທຶນ, ນັກລົງທຶນຄວນເຝົ້າລະວັງຕໍ່ ຄໍາ ຮ້ອງທຸກທີ່ຍັງບໍ່ໄດ້ຮັບການແກ້ໄຂ ທີ່ອາດຈະສືບທອດມາຈາກ 'ບັນຫາມໍລະດົກ' (Interlaken Group 2017, CDC ແລະ DEG 2016).[xxiii] ບັນຫາດັ່ງກ່າວອາດຈະຖືກສືບທອດມາຈາກ , ຕົວຢ່າງ, ເຈົ້າຂອງທີ່ດິນ ຫຼື ການປະຕິບັດງານທີ່ຜ່ານມາ; ຂໍ້ຂັດແຍ່ງທາງດ້ານການເມືອງທີ່ນໍາໄປສູ່ການຍົກຍ້າຍ; ຫຼື ຂັ້ນຕອນການປຶກສາຫາລືທີ່ບໍ່ພຽງພໍ ຫຼື ໄດ້ຮັບຄ່າຊົດເຊີຍທີ່ມອງວ່າບໍ່ໃນຂັ້ນຕອນການເວນຄືນທີ່ດິນຂອງນັກລົງທຶນເອງ. ກົນໄກການຮ້ອງທຸກຂອງນັກລົງທຶນ ແມ່ນເຄື່ອງມືທີ່ສໍາຄັນທີ່ຊ່ວຍໃຫ້ນັກລົງທຶນໄດ້ຮັບ ແລະ ແກ້ໄຂຄວາມກັງວົນໃຈ ແລະ ການຮ້ອງທຸກ ຈາກຊຸມຊົນທ້ອງຖິ່ນ ກ່ຽວກັບບັນຫາດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ຈາກບັນດາຄົນງານ ກ່ຽວກັບບັນຫາໃນບ່ອນເຮັດວຽກ (Smaller, 2014).

## 5. ບົດແນະນໍາຂອງ ອາຊຽນ ສໍາລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກໍາ ແລະ ປ່າໄມ້

ບົດແນະນໍາຂອງອາຊຽນ ສໍາລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກໍາ ແລະ ປ່າໄມ້ ແມ່ນໄດ້ຮັບ ແຮງຈູງໃຈ ແລະ ມີພື້ນຖານ ຈາກຄະນະກໍາມະການກ່ຽວກັບຫຼັກການຄວາມໝັ້ນຄົງ ດ້ານອາຫານໂລກ ສໍາລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນລະບົບກະສິກໍາ ແລະ ອາຫານ (CFS-RAI). ບົດແນະນໍາ ແມ່ນເຄື່ອງມືໃນການສະໜັບສະໜູນການຈັດຕັ້ງປະຕິບັດ CFS-RAI ໃນອາຊຽນ. ບົດແນະນໍາແມ່ນເພື່ອບັນດາລັດຖະບານ AMS (ລວມທັງບັນດາອົງການຍ່ອຍ, ສູນກາງ ແລະ ພາກພື້ນ) ແລະ ດັດປັບຕາມບັນດາສິ່ງທ້າທາຍ ສະເພາະທີ່ອາຊຽນກໍາລັງປະເຊີນຢູ່ ດັ່ງທີ່ໄດ້ກໍານົດໄວ້ໃນພາກທີ 4, ໂດຍ ໃນຂົງເຂດສ່ວນໃຫຍ່ ແມ່ນເນັ້ນໜັກ ໃສ່ໂຄງການລົງທຶນຂອງເອກະຊົນຂະໜາດໃຫຍ່ ທີ່ສ້າງຫຼາຍຜົນກະທົບດ້ານລົບທີ່ສໍາຄັນທີ່ສຸດ ຂອງການລົງທຶນ FAF ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ. ເຖິງຢ່າງໃດກໍ່ຕາມ, ກໍຍັງມີບົດບາດ ແລະ ຄວາມຮັບຜິດຊອບທີ່ສໍາຄັນ ສໍາລັບ ພາກສ່ວນມີສ່ວນຮ່ວມ ທີ່ຢູ່ນອກລັດຖະບານ ແລະ ຜູ້ປະກອບການເອກະຊົນຂະໜາດໃຫຍ່, ເຊິ່ງໄດ້ກໍານົດໄວ້ໃນພາກທີ 6. ບົດແນະນໍານີ້ ແມ່ນແບບສະໝັກໃຈ.

***<u>ບົດແນະນໍາທີ 1:</u> ປະກອບສ່ວນເຂົ້າໃນຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພຂອງອາຫານ ແລະ ໂພຊະນາການທີ່ດີຂຶ້ນ***

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນປະກອບສ່ວນເຂົ້າໃນຄວາມໝັ້ນຄົງ ດ້ານສະບຽງອາຫານ, ຄວາມປອດໄພຂອງອາຫານ ແລະ ໂພຊະນາການທີ່ດີຂຶ້ນໂດຍ:
    - ຮັບຮູ້ ແລະ ເຄົາລົບສິດທິຂອງພົນລະເມືອງອາຊຽນທຸກຄົນໃນການເຂົ້າເຖິງອາຫານທີ່ພຽງພໍ, ປອດໄພ, ຫລາກຫລາຍ, ເປັນທີ່ຍອມຮັບທາງດ້ານວັດທະນະ ທໍາ, ມີພາບລັກໜ້າດຶງດູດ ແລະ ມີລາຄາຖືກ ແລະ

    ມີທາດບຳ ລຸງ, ແລະ ປາສະຈາກຄວາມອຶດຫິວ.
    - ສະໜັບສະໜູນພັນທະຂອງ AMS ໃນການບັນລຸເປົ້າໝາຍ ການພັດທະນາ ແບບຍືນຍົງ 2 (SDG2), ແລະ ປະກອບສ່ວນເຂົ້າໃນຈຸດປະສົງ ແລະ ເປົ້າໝາຍຂອງບົດແນະນຳໃນພາກພື້ນອາຊຽນ ກ່ຽວກັບນະໂຍບາຍດ້ານຄວາມໝັ້ນຄົງ ດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ກອບລວມຂອງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ແຜນປະຕິບັດງານຍຸດທະສາດ ຂອງອາຊຽນ 2015 - 2020.
    - ຊ່ວຍໃນການຮັບປະກັນການສະໜອງ ອາຫານທີ່ພຽງພໍ, ລາຄາບໍ່ແພງ, ປອດໄພ ແລະ ມີທາດບຳລຸງສຳລັບການຂະຫຍາຍຕົວຂອງປະຊາກອນອາຊຽນໃນເຂດຊົນນະບົດ ແລະ ຕົວເມືອງ, ໃນລະດັບພາກພື້ນ, ລະດັບຊາດ ແລະ ລະດັບຄົວເຮືອນໂດຍຜ່ານການຜະລິດທີ່ເພີ່ມຂຶ້ນ ແລະ ຫລາກຫລາຍ, ການຊື້ຜ່ານລາຍໄດ້ເພີ່ມຂຶ້ນ ພ້ອມທັງປັບປຸງການເຂົ້າເຖິງ ແລະ ແຈກຢາຍ ຄັງສະສົມອາຫານທີ່ມີຢູ່.
    - ການຮັບຮູ້ ແລະ ການເຄົາລົບສິດທິຂອງຊາວກະສິກອນຕໍ່ຄວາມຫລາກຫລາຍຂອງແນວພັນ.
- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
    - ສະໜອງ ສະພາບແວດລ້ອມທີ່ປອດໄພ, ຊ່ວຍໃຫ້ການລົງທຶນຢ່າງມີຄວາມຮັບຜິດຊອບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ.
    - ການພັດທະນາແຜນການຂອງຂະແໜງການ FAF ແຫ່ງຊາດ ທີ່ລວມເອົາຍຸດທະສາດ ເພື່ອບັນລຸຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພ ຂອງອາຫານ ແລະ ໂພຊະນາການທີ່ດີຂຶ້ນ.
    - ສະໜັບສະໜູນໂຄງການເສີມສ້າງອາຫານ, ລວມທັງຜ່ານການເປັນຮຸ້ນສ່ວນກັບພາກເອກະຊົນ, ເພື່ອຊ່ວຍເພີ່ມຄວາມປອດໄພດ້ານໂພຊະນາການ.
    - ພັດທະນາກົນໄກການເງິນໃນຊົນນະບົດທີ່ມີນະວັດຕະກຳ, ລວມທັງຫຸ້ນສ່ວນພາກລັດ - ເອກະຊົນ (PPPs), ເພື່ອປັບປຸງການເຂົ້າເຖິງຕະຫຼາດ ແລະ ຂະຫຍາຍພື້ນຖານໂຄງລ່າງຊົນນະບົດ ໃນເຂດ ທີ່ມີຄວາມບໍ່ໝັ້ນຄົງດ້ານອາຫານ, ໂດຍສະເພາະເສັ້ນທາງ, ການຂົນສົ່ງ, ພະລັງງານ, ຊົນລະປະທານ ແລະ ເຄືອຂ່າຍການເກັບຮັກສາທີ່ຈຳເປັນເພື່ອເພີ່ມການຜະລິດສະບຽງອາຫານ ແລະ ກຳ ລັງຊື້. .
    - ຕິດຕາມຜົນກະທົບຂອງການລົງທຶນຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ແລະ ຄວາມປອດໄພ ແລະ ຄວາມຫຼາກຫຼາຍຂອງອາຫານ.

**<u>ບົດແນະນຳທີ 2:</u> ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດທີ່ສະເໝີພາບ, ຍືນຍົງ ແລະ ທົ່ວເຖິງ ແລະ ການລຶບລ້າງຄວາມທຸກຍາກ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນປະກອບສ່ວນໃນ ການພັດທະນາເສດຖະກິດ ທີ່ມີຄວາມສະເໝີພາບ, ຍືນຍົງ, ທົ່ວເຖິງ, ເຄົາລົບວັດທະນະທຳ, ແລະ ເໝາະສົມ ແລະ ການລຶບລ້າງຄວາມທຸກຍາກໂດຍ:
    - ຊ່ວຍໃຫ້ບັນລຸການຂະຫຍາຍຕົວຢ່າງສະເໝີພາບ, ຍືນຍົງ ແລະ ທົ່ວເຖິງ ໃນລັກສະນະ ທີ່ຫຼຸດຜ່ອນຄວາມທຸກຍາກ, ຮັບປະກັນຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ຄວາມເຂັ້ມແຂງ ຂອງແມ່ຍິງ, ແລະ ຫຼຸດຜ່ອນຄວາມບໍ່ສະເໝີພາບພາຍໃນປະເທດແລະ ລະຫວ່າງ AMS, ເພື່ອປະຕິບັດເປົ້າໝາຍທຳອິດຂອງວິໄສທັດ ແລະ ແຜນຍຸດທະສາດ ສຳລັບການຮ່ວມມືອາຊຽນໃນ FAF.
    - ສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດທີ່ເໝາະສົມ, ປອດໄພ ແລະ ຍືນຍົງ, ໂດຍສະເພາະ ສຳລັບຜູ້ທີ່ຢູ່ໃນເຂດຊົນນະບົດ, ມີຄ່າຕອບແທນ ແລະ ລາຍໄດ້ທີ່ພຽງພໍ, ສະເໝີພາບໃນຄ່າແຮງງານ ແລະ ຊຸດສິດຜົນປະໂຫຍດຕ່າງໆ ລະຫວ່າງຍິງ-ຊາຍ, ມີສະຖານທີ່ເຮັດວຽກທີ່ເໝາະສົມ, ແລະ ມີໂອກາດໃນການຝຶກອົບຮົມ ແລະ ພັດທະນາທັກສະສີມື.
    - ຊຸກຍູ້ການປະດິດສ້າງ ແລະ ການກະຈາຍເຕັກໂນໂລຊີ ໃໝ່ໆ ແລະ ຍືນຍົງ ທີ່ຈະຊ່ວຍເພີ່ມປະສິດທິພາບຂອງຊັບພະຍາກອນ, ຜົນຜະລິດ ແລະ ຄຸນນະພາບການຜະລິດ, ເພື່ອສະໜັບສະໜູນຂໍ້ແນະນຳ 7, ລວມ

ທັງ ຜ່ານການປະສານງານ, ການຮ່ວມມື ແລະ ການເປັນຮຸ້ນສ່ວນ ລະຫວ່າງຜູ້ຜະລິດຂະໜາດນ້ອຍ ແລະ ໃຫຍ່.

- ຊ່ວຍເຫຼືອສະຫະກອນ, ຊາວກະສິກອນຂະໜາດນ້ອຍ, ຜູ້ເກັບກ່ຽວປ່າໄມ້, ວິສາຫະກິດປ່າໄມ້ ຂະໜາດນ້ອຍ ແລະ SME ອື່ນໆ ເພື່ອປັບປຸງຄຸນນະພາບ ແລະ ມາດຕະຖານ (ລວມທັງການປະຕິບັດຕາມມາດຕະຖານ), ແລະ ເພື່ອສະໜັບສະໜູນຜູ້ທີ່ຕ້ອງການຫັນເປັນວິສາຫະກິດການຄ້າ ທີ່ມີຄວາມສາມາດແຂ່ງຂັນໄດ້.
- ແບ່ງປັນມູນຄ່າຜ່ານ ພັນທະທີ່ມີຄວາມສົມດຸນ ແລະ ສາມາດບັງຄັບໃຊ້ໄດ້ ຈາກທັງນັກລົງທຶນ ແລະ ປະເທດທີ່ມີການລົງທຶນ.
- ສະໜັບສະໜູນສັນຍາ ທີ່ມີຄວາມເປັນທຳ ແລະ ໂປ່ງໃສຫຼາຍຂຶ້ນ ລະຫວ່າງຜູ້ຊື້ ແລະ ຜູ້ຜະລິດສິນຄ້າກະສິກຳ ທີ່ແກ້ໄຂຄວາມບໍ່ສົມດູນດ້ານອຳນາດ, ໂດຍຜ່ານສະພາບແວດລ້ອມ ທີ່ມີລະບຽບກົດໝາຍທີ່ເອື້ອອຳນວຍ ແລະ ມີສະຖຽນລະພາບ, ພ້ອມທັງ ນຳໃຊ້ ຫຼື ປັບປຸງໃຫ້ສອດຄ່ອງກັບ ມາດຕະຖານຄວາມສະ ໝັກໃຈທີ່ມີຢູ່ໃນຂົງເຂດນີ້.
- ເຄົາລົບ ແລະ ສົ່ງເສີມການດຳລົງຊີວິດໃນປ່າ ຕາມຮີດຄອງວັດທະນະທຳ ທີ່ມີຄວາມເຂັ້ມແຂງ ແລະ ຍືນຍົງ.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ເອົາພັນທະຜູກພັນ ສະເພາະທີ່ສາມາດວັດແທກໄດ້ ເຂົ້າໃນສັນຍາ ນັກລົງທຶນ-ລັດ, ແລະ ຊຸກຍູ້ໂຄງການພັດທະນາທຸລະກິດ ແລະ ການຝຶກອົບຮົມເພື່ອອຳນວຍຄວາມສະດວກ ໃຫ້ແກ່ ການມີສ່ວນ ຮ່ວມ ຂອງທຸລະກິດທ້ອງຖິ່ນ.
  - ຄົ້ນຄ້ວາທາງເລືອກອື່ນ ນອກຈາກການສຳປະທານທີ່ດິນຂະໜາດໃຫຍ່, ແລະ ກະຕຸກຊຸກຍູ້ໃຫ້ນັກລົງທຶນມີພັນທະຜູກພັນໃນການເຮັດສັນຍາກະສິກຳ ທີ່ມີຄວາມສະເໝີພາບ ແລະ ທົ່ວເຖິງ, ແລະ ມີຮູບການຈ້າງປູກ ຫຼື ລ້ຽງ ທີ່ຍັງໃຫ້ຊາວກະສິກອນຂະໜາດນ້ອຍສາມາດຢູ່ໃນທີ່ດິນຂອງຕົນ, ຕາມຄວາມເໝາະສົມສຳລັບນັກລົງທຶນ, ໂຄງການ ແລະ ເງື່ອນໄຂທ້ອງຖິ່ນ. ຮູບແບບສັນຍາກະສິກຳ ທີ່ຈິງແລ້ວ ຄວນຈະໃຫ້ຜົນປະໂຫຍດແກ່ຊຸມຊົນທັງໝົດ ບໍ່ແມ່ນ ມີພຽງແຕ່ຊາວກະສິກອນສ່ວນບຸກຄົນທີ່ຮັ່ງມີເທົ່ານັ້ນ.
  - ແນະນຳຍຸດທະສາດການມີສ່ວນຮ່ວມຂອງຊຸມຊົນໃນສັນຍານັກລົງທຶນ-ລັດ, ລວມທັງຂໍ້ຕົກລົງການພັດທະນາຊຸມຊົນ, ໂດຍສອດຄ່ອງກັບຫຼັກການການການຍິນຍອມແບບມີອິດສະລະ ໄດ້ຮັບຂໍ້ມູນ ລ່ວງໜ້າ (FPIC) ແລະ ບົດແນະນຳແບບສະໝັກ ໃຈກ່ຽວກັບການຄຸ້ມຄອງບໍລິຫານ ການຄອບຄອງນຳໃຊ້ທີ່ດິນ, ການປະມົງ ແລະ ປ່າໄມ້ໃນບໍລິບົດ ຂອງຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (VGGT), CFS-RAI ແລະ ສ□ານັກງານຂ້າຫຼວງໃຫຍ່ ອົງການສະຫະປະຊາຊາດ ສຳລັບຫຼັກການສິດທິມະນຸດໃນການເຮັດສັນຍາຢ່າງມີຄວາມຮັບຜິດຊອບ (Ruggie, 2011xxiv). ໃນກໍລະນີຊົນເຜົ່າພື້ນເມືອງ, ການນຳສະເໜີຂໍ້ຕົກລົງ FPIC, ແມ່ນສອດຄ່ອງກັບ ຖະແຫຼງການຂອງສະຫະປະຊາຊາດ ວ່າດ້ວຍສິດທິຂອງຄົນພື້ນເມືອງ ແລະ ຄູ່ມື FPIC ຂອງ FAO.
  - ໂດຍການນຳໃຊ້ ເອກະສານແນະນຳ ທີ່ມີຢູ່ແລ້ວ (ເຊັ່ນຄູ່ມືດ້ານກົດໝາຍ ຂອງ UNIDROIT-FAO-IFAD ໃນການເຮັດສັນຍາການກະສິກຳ ປີ 2015; ແລະ ຂໍ້ຕົກລົງທີ່ເປັນຕົວແບບ ສຳລັບສັນຍາກະສິກຳທີ່ມີຄວາມຮັບຜິດຊອບ; ທີ່ຈະອອກມາໃນປີ 2018[xxv]) ເພື່ອພັດທະນາ ສັນຍາທີ່ເປັນທຳກັບຜູ້ຮັບປູກ ຫຼື ລ້ຽງ, ແລະ ເຮັດວຽກກັບຊາວກະສິກອນ, ສະຫະກອນ ແລະ ອົງການຈັດຕັ້ງຂອງຊາວກະສິກອນ ເພື່ອຍົກສູງຄວາມຮັບຮູ້ກ່ຽວກັບສິດ ແລະ ພັນທະໃນສັນຍາ
  - ໃຫ້ບັນດາສະຫະກອນ ແລະ ອົງການຕົວແທນຂອງຜູ້ຜະລິດອາຫານຂະໜາດນ້ອຍ ແລະ ຜູ້ບໍລິໂພກ ມີສ່ວນຮ່ວມໃນເວທີດ້ານນະໂຍບາຍ ແລະ ການຕັດສິນໃຈ ທີ່ກ່ຽວຂ້ອງກັບການລົງທຶນ.

- ສ້າງຍຸດທະສາດເພື່ອຮັບປະກັນການລວມເອົາແມ່ຍິງ ແລະ ກຸ່ມຄົນດ້ອຍໂອກາດ ເຂົ້າໃນໂຄງການລົງທຶນ ແລະ ໂຄງການຮັບປູກ ຫຼື ລ້ຽງ, ໂດຍ ຄຳນຶງເຖິງຄວາມບໍ່ສົມດຸນດ້ານອຳນາດທີ່ມີຢູ່.
- ການຈັດສັນເງິນສາທາລະນະເພື່ອສະໜັບສະໜູນຊາວກະສິກອນຂະໜາດນ້ອຍ, ສະຫະກອນ, ຜູ້ເກັບກ່ຽວປ່າໄມ້ ແລະ SME, ໂດຍຜ່ານແຜນງານ ແລະ ເຄື່ອງມືໄລຍະຍາວເຊັ່ນ: ການເງິນຈຸລະພາກ, ການປ່ອຍສິນເຊື່ອຊົນນະບົດ, ການເຊື່ອມໂຍງຕະຫຼາດ ແລະ ໂຄງການພັດທະນາວິສາຫະກິດຂະໜາດນ້ອຍ, ໂດຍສະເພາະໃນຊຸມຊົນທີ່ທຸກຍາກ ແລະ ດ້ອຍໂອກາດ.

**<u>ບົດແນະນຳທີ 3</u>: ສົ່ງເສີມຄວາມສະເໝີພາບ, ການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ຊາວໜຸ່ມ, ຊົນເຜົ່າພື້ນເມືອງ ແລະ ກຸ່ມຄົນດ້ອຍໂອກາດ.**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນປະກອບສ່ວນໃຫ້ແກ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ການສ້າງຄວາມເຂັ້ມແຂງໂດຍ:
  - ສ້າງຄວາມເຂັ້ມແຂງໃຫ້ແກ່ການເຂົ້າເຖິງໂອກາດທີ່ສະເໝີພາບ, ແລະ ສົ່ງເສີມ ແລະ ປົກປ້ອງສິດທິມະນຸດຂອງແມ່ຍິງ, ຊາວໜຸ່ມ, ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ, ຄົນງານອົບພະຍົບ, ກຸ່ມຊົນເຜົ່າສ່ວນນ້ອຍ, ຊົນເຜົ່າພື້ນເມືອງ ແລະ ກຸ່ມສ່ຽງ ແລະ ດ້ອຍໂອກາດ, ສອດຄ່ອງກັບ ແຜນການຊຸມຊົນ ສັງຄົມ-ວັດທະນະທຳ ອາຊຽນ 2025.
  - ຮັບຮູ້ການປະກອບສ່ວນອັນໃຫຍ່ຫຼວງຂອງແມ່ຍິງໃນຂະແໜງການ FAF, ພ້ອມທັງຮັບຮູ້ຄວາມສຳຄັນຂອງຂະແໜງການ FAF ໃນອາຊຽນທີ່ໄດ້ເອົາໃຈໃສ່ຊາວໜຸ່ມຢ່າງມີປະສິດທິຜົນ, ແລະ ດຶງດູດເອົາຊາວໜຸ່ມ ເຂົ້າໃນຂະແໜງການ ທີ່ເລີ່ມສູງອາຍຸນີ້ ນັບມື້ນັບຫຼາຍຂຶ້ນ.
  - ຮັບຮູ້ເຖິງບົດບາດເປັນໃຈກາງຂອງຂະແໜງ FAF ໃນການສົ່ງເສີມຮູບແບບທຸລະກິດທີ່ມີສ່ວນຮ່ວມ ເພື່ອຊ່ວຍຮັບປະກັນການເຂົ້າເຖິງການຈ້າງງານ ແລະ ການປະກອບການ.
  - ເພີ່ມທະວີການເຂົ້າເຖິງທີ່ດິນ, ຊັບພະຍາກອນທຳມະຊາດ, ວັດຖຸດິບ, ການບໍລິການ (ການຂະຫຍາຍ, ການໃຫ້ຄຳປຶກສາ ແລະ ການເງິນ), ການສຶກສາ, ການຝຶກອົບຮົມ, ຕະຫຼາດ, ແລະ ຂໍ້ມູນຂ່າວສານ, ແລະ ການສ້າງຄວາມເຂັ້ມແຂງ ດ້ານສິດຕໍ່ທີ່ດິນ ຂອງແມ່ຍິງ.
  - ການເຊື່ອມສານບັນຫາບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງຂອງແມ່ຍິງພາກປະຕິບັດ ດ້ານກະສິກຳ, ການປະມົງ ແລະ ປ່າໄມ້ ແບບຍືນຍົງ, ເພື່ອແກ້ໄຂຄວາມສ່ຽງທີ່ເພີ່ມຂຶ້ນຂອງແມ່ຍິງ, ຊົນເຜົ່າພື້ນເມືອງ ແລະ ກຸ່ມອື່ນໆ ຕໍ່ກັບ ຜົນກະທົບທາງດ້ານ ເສດຖະກິດ-ສັງຄົມ ຂອງ ໄພພິບັດທຳມະຊາດ ແລະ ການປ່ຽນແປງຂອງດິນຟ້າອາກາດ. ໂດຍສອດຄ່ອງກັບ ວິໄສທັດ ອາຊຽນ ແລະ ແຜນຍຸດທະສາດສຳລັບການຮ່ວມມືອາຊຽນໃນ FAF.
  - ຮັບປະກັນໃຫ້ແມ່ຍິງ, ຊາວໜຸ່ມ, ຊົນເຜົ່າພື້ນເມືອງ ແລະ ຄົນທີ່ດ້ອຍໂອກາດ ເຂົ້າຮ່ວມຢ່າງມີຄວາມໝາຍໃນການຕັດສິນໃຈ, ບົດບາດໃນການເປັນຜູ້ນຳ, ແລະ ການເປັນຫຸ້ນສ່ວນ.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ປັບປຸງການເຂົ້າເຖິງຂອງແມ່ຍິງ ຕໍ່ກັບການສຶກສາ ແລະ ກົນໄກການແກ້ໄຂຕາມກົດໝາຍ, ແລະ ປັບປຸງຄວາມສາມາດຂອງແມ່ຍິງໃນການເຕົ້າໂຮມ ແລະ ຮຽກຮ້ອງສິດທິທາງການເມືອງ . ໃນບາງກໍລະນີ, ບົດບາດນີ້ອາດກ່ຽວຂ້ອງກັບການປັບປຸງລະບົບກົດໝາຍ ແຕ່ສ່ວນໃຫຍ່ແລ້ວ ແມ່ນຈະ ກ່ຽວຂ້ອງກັບການບັງຄັບໃຊ້ ກົດໝາຍ ທີ່ມີຢູ່ແລ້ວ.
  - ຮັບສະໝັກ ພະນັກງານສົ່ງເສີມເພດຍິງເພີ່ມເຕີມ ແລະ ຝຶກອົບຮົມ ພະນັກງານສົ່ງເສີມທັງໝົດ ເພື່ອໃຫ້ການສະໜັບສະໜູນ ຕາມບົດບາດຍິງ-ຊາຍ ໃຫ້ແກ່ ຊາວກະສິກອນຂະໜາດນ້ອຍ ແລະ SME.
  - ອຳນວຍຄວາມສະດວກໃຫ້ແກ່ການເປັນຄູ່ຮ່ວມມື ແລະ ເຄືອຂ່າຍ ລະຫວ່າງອົງການຈັດຕັ້ງທາງສັງຄົມ,

ກຸ່ມຊາວກະສິກອນ, ກຸ່ມຊົນເຜົ່າພື້ນເມືອງ ແລະ ສະຫະກອນແມ່ຍິງເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ.

- ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ ໃນຂະແໜງການ FAF ໂດຍຜ່ານນະໂຍບາຍຕ່າງໆທີ່ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຢ່າງມີຄວາມໝາຍ ຕໍ່ແຫຼ່ງຊັບພະຍາກອນ, ຕະຫຼາດ ແລະ ໂອກາດ, ຊຶ່ງລວມມີ:
  - ສ້າງຕັ້ງສະຖາບັນການສຶກສາ ແລະ ການຝຶກອົບຮົມ FAF, ທີ່ມີຫຼັກສູດການກະສິກຳ ໃນຟາມ ແລະ ເຕັກນິກ, ລວມທັງຫຼັກສູດການເປັນຜູ້ປະກອບການດ້ານກະສິກຳ.
  - ສະໜັບສະໜູນນັກລົງທຶນທີ່ພະຍາຍາມເຊື່ອມໂຍງຊາວໜຸ່ມ ເຂົ້າໃນຂະບວນການຕັດສິນໃຈ.
  - ສະໜັບສະໜູນກຸ່ມຜູ້ຜະລິດທີ່ເປັນຕົວແທນໃຫ້ແມ່ຍິງ, ຊາວໜຸ່ມ ແລະ ຊົນເຜົ່າພື້ນເມືອງ ເພື່ອເສີມຂະຫຍາຍຄວາມສາມາດໃນການໂຄສະນາ ແລະ ອຳນາດໃນການຕໍ່ລອງ ຂອງເຂົາເຈົ້າ.
- ການພັດທະນາແຜນງານຕ່າງໆເພື່ອປ່ຽນແປງຄວາມຮັບຮູ້ຂອງຊາວໜຸ່ມ ຕໍ່ຂະແໜງ FAF ແລະ ກະຕຸກຊຸກຍູ້ໃຫ້ໄວໜຸ່ມ ເລືອກເສັ້ນທາງອາຊີບ FAF ໃຫ້ຫຼາຍຂຶ້ນ.
- ຮຽກຮ້ອງໃຫ້ນັກລົງທຶນສ້າງຍຸດທະສາດການມີສ່ວນຮ່ວມຂອງຊາວໜຸ່ມ ໃຫ້ເປັນສ່ວນໜຶ່ງ ຂອງແຜນທຸລະກິດຂອງຕົນ, ລວມທັງການຝຶກງານ ແລະ ທຶນການສຶກສາ.
- ສົ່ງເສີມການນຳໃຊ້ ICT ໃນ FAF ເຊັ່ນ: ໂທລະສັບມືຖື, ການບໍລິການອິນເຕີເນັດ, ແອັບ apps ແລະ ສື່ສັງຄົມ, ທັງເພື່ອປັບປຸງການເຂົ້າເຖິງຂໍ້ມູນຂ່າວສານ, ແລະ ດຶງດູດຊາວໜຸ່ມ ໃຫ້ເປັນຊາວກະສິກອນ ລຸ້ນຕໍ່ໄປ.
- ສະໜັບສະໜູນການສ້າງຕັ້ງກຸ່ມເງິນຝາກປະຢັດຂອງຊາວໜຸ່ມ ພາຍໃນຊຸມຊົນ ແລະ/ຫຼື ກະຕຸກຊຸກຍູ້ກຸ່ມທ້ອນເງິນຊຸມຊົນໃຫ້ລວມເອົາຊາວໜຸ່ມເຂົ້ານຳ.
- ຮັບຮູ້ບົດບາດ ແລະ ອິດທິພົນ ທີ່ເປັນເອກະລັກສະເພາະຂອງແມ່ຍິງ ໃນຄວາມໝັ້ນຄົງ ດ້ານອາຫານ ແລະ ໂພຊະນາການໃນລະດັບຄອບຄົວ ແລະ ຊຸມຊົນ, ແລະ ສະໜັບສະໜູນໃຫ້ແມ່ຍິງສາມາດແປການລົງທຶນໃນ FAF ໄປສູ່ຜົນໄດ້ຮັບດ້ານໂພຊະນາການ ແລະ ສະບຽງອາຫານ ໃນທາງບວກ ສຳລັບຄອບຄົວ ແລະ ຊຸມຊົນທີ່ເຂົາເຈົ້າອາໄສຢູ່.

<u>**ບົດແນະນຳທີ 4:**</u> **ເຄົາລົບການຄອບຄອງນຳໃຊ້ທີ່ດິນ, ການປະມົງ, ແລະ ປ່າໄມ້, ແລະ ການເຂົ້າເຖິງແຫຼ່ງນໍ້າ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນເຄົາລົບການຄອບຄອງນຳໃຊ້ທີ່ດິນ, ການປະມົງ, ແລະ ປ່າໄມ້, ແລະ ການເຂົ້າເຖິງແຫຼ່ງນ�້າໂດຍ:
  - ເຄົາລົບຜູ້ຖືສິດຄອບຄອງນຳໃຊ້ທີ່ດິນ, ການປະມົງ ແລະ ປ່າໄມ້ທີ່ຊອບທຳ ທຸກຄົນ, ລວມທັງຜູ້ຖືສິດຕາມປະເພນີ, ໂດຍສອດຄ່ອງກັບ ບົດແນະນຳຕາມຄວາມສະ ໝັກ ໃຈກ່ຽວກັບການຄຸ້ມຄອງບໍລິຫານການຄອບຄອງ ນຳໃຊ້ທີ່ດິນ, ການປະມົງ ແລະ ປ່າໄມ້ (VGGT), ແລະ ບົດແນະນຳແບບສະໝັກໃຈເພື່ອຮັບປະກັນຄວາມໝັ້ນຄົງຂອງການປະມົງຂະໜາດນ້ອຍແບບຍືນຍົງ. ໃນບໍລິບົດຂອງຄວາມໝັ້ນຄົງ ດ້ານສະບຽງອາຫານ ແລະ ການລົບລ້າງຄວາມທຸກຍາກ, ແລະ ໃນກໍລະນີຂອງຊົນເຜົ່າພື້ນເມືອງ, ແມ່ນສອດຄ່ອງກັບຖະແຫຼງການຂອງສະຫະປະຊາຊາດ ວ່າດ້ວຍສິດທິຂອງຄົນພື້ນເມືອງ.
  - ຮັບຮູ້ສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນໃນການຍິນຍອມແບບມີອິດສະລະ ໄດ້ຮັບຂໍ້ມູນ ລ່ວງໜ້າ (FPIC) ຕໍ່ການລົງທຶນໃດໆໃນພື້ນທີ່ດິນ ແລະ ປ່າໄມ້ທີ່ເປັນປະເພນີຂອງເຂົາເຈົ້າ ແລະ ຮັບປະກັນວ່າໄດ້ຜ່ານ FPIC.
  - ປະເມີນຜົນກະທົບທາງສັງຄົມຕໍ່ຜູ້ຖືສິດຄອບຄອງ ນຳໃຊ້ທີ່ຊອບທຳທັງໝົດ, ລວມທັງການສ້າງຂໍ້ມູນພື້ນຖານ ຂອງສະພາບສັງຄົມທີ່ມີຢູ່ກ່ອນ ກິດຈະກຳການລົງທຶນໃດໆ ແລະ ປະເມີນຜົນກະທົບຕໍ່ປະຊາຊົນ

ທີ່ອາໄສຢູ່ໃນ ຫຼື ບໍລິເວນອອ້ມແອ້ມພື້ນທີ່ໂຄງການທີ່ສະເໜີ ໂດຍໃຫ້ຄວາມສົນໃຈເປັນພິເສດແກ່ ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ.

- ຫລີກລ້ຽງການຍົກຍ້າຍ ແລະ ຈັດສັນພູມລໍາເນົາ ທຸກຄົນທີ່ຖືສິດຄອບຄອງທີ່ຊອບທໍາ ໂດຍສອດຄ່ອງກັບ ກົດໝາຍຂອງ AMS, VGGT, ຫຼັກການພື້ນຖານ ແລະ ຂໍ້ແນະນໍາ ກ່ຽວກັບການຍົກຍ້າຍ ໂດຍອີງໃສ່ ການພັດທະນາຂອງ ສໍານັກງານຂ້າຫຼວງໃຫຍ່ ເພື່ອສິດທິມະນຸດ ຂອງອົງການສະຫະປະຊາຊາດ ແລະ ມາດຕະຖານການປະຕິບັດທີ 5 ຂອງ IFC ກ່ຽວກັບການຈັດຫາທີ່ດິນ ແລະ ການຍົກຍ້າຍຈັດສັນແບບ ບໍ່ສະໝັກໃຈ.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
    - ສ້າງຄວາມເຂັ້ມແຂງດ້ານກົດໝາຍ ທີ່ດິນ ແລະ ນະໂຍບາຍການນໍາໃຊ້ທີ່ດິນ ພ້ອມທັງ ຄວາມສາມາດ ໃນ ການບໍລິຫານ ແລະ ລະບົບຕ່າງໆໃນລະດັບທ້ອງຖິ່ນເພື່ອກໍານົດ, ບັນທຶກ, ແລະ ໃນບ່ອນທີ່ເໝາະສົມ, ກໍານົດສິດເປັນເຈົ້າຂອງທີ່ດິນຢ່າງເປັນທາງການ, ໂດຍຮັບຮູ້ວ່າ ລະບອບການຄອບຄອງທີ່ດິນ ທີ່ໝັ້ນຄົງ ສາມາດສະໜັບສະໜູນການລົງທຶນຢ່າງມີຄວາມຮັບຜິດຊອບ.
    - ອໍານວຍຄວາມສະດວກໃຫ້ແກ່ການອອກໃບຕາດິນ ລວມໝູ່, ຊຸມຊົນ ແລະ ບຸກຄົນ ແລະ ຮູບແບບອື່ນໆ ໃນການປົກປ້ອງສິດຄອບຄອງນໍາໃຊ້ ໃນວິທີທີ່ຮັບຮູ້ເຖິງແນວຄິດທີ່ກວ້າງຂວາງ ກ່ຽວກັບຄວາມເປັນເຈົ້າ ຂອງ ແລະ ການເຂົ້າເຖິງທີ່ດິນ, ແລະ ນັ້ນແມ່ນສາມາດເຂົ້າເຖິງໄດ້ ໂດຍຊຸມຊົນທີ່ທຸກຍາກ ແລະ ກຸ່ມດ້ອຍ ໂອກາດ, ຮຽນຮູ້ຈາກປະສົບການທີ່ຜ່ານມາໃນໂຄງການອອກໃບຕາດິນສ່ວນບຸກຄົນຕ່າງ ໆ, ໂດຍສະເພາະ ສໍາລັບຜູ້ທຸກຍາກໃນຊົນນະບົດ.
    - ປູກຈິດສໍານຶກໃຫ້ແກ່ຊຸມຊົນກ່ຽວກັບສິດຄອບຄອງນໍາໃຊ້ທີ່ຊອບທໍາ ຂອງເຂົາເຈົ້າ, ຊຶ່ງລວມມີ:
        - ສ້າງຂີດຄວາມສາມາດຂອງຊຸມຊົນທ້ອງຖິ່ນເພື່ອພົວພັນກັບນັກລົງທຶນ, ລວມທັງການເຂົ້າຮ່ວມ ການເຈລະຈາ.
        - ພັດທະນາຂະບວນການທີ່ລຽບງ່າຍ ແລະ ມີປະສິດທິພາບ ເພື່ອທີ່ ຄວາມກັງວົນ, ການຮ້ອງທຸກ ແລະ ການລະເມີດສິດທິກ່ຽວກັບທີ່ດິນ ຫຼື ຊັບພະຍາກອນ ຂອງຊຸມຊົນສາມາດຍົກຂຶ້ນມາ ແລະ ແກ້ໄຂໄດ້ (ສໍາລັບທຸກກຸ່ມ, ລວມທັງນັກລົງທຶນ).
    - ດໍາເນີນກິດຈະກໍາ ການປູກຈິດສໍານຶກຮ່ວມ ໃນບັນດາ AMS ໃນທຸກລະດັບຂອງລັດຖະບານກ່ຽວກັບ VGGT ແລະ ບັນດາຫຼັກການ ແລະ ແນວທາງອື່ນໆທີ່ກ່ຽວຂ້ອງ, ແລະ ຂັດຂວາງ ການປະຕິບັດ ການ ສົ່ງເສີມການລົງທຶນ ທີ່ທໍາລາຍຄວາມໝັ້ນຄົງຂອງສິດຄອບຄອງນໍາໃຊ້. ຮັບປະກັນວ່າ ໃນກໍລະນີທີ່ການ ຍົກຍ້າຍຈັດສັນ ຖືວ່າບໍ່ສາມາດຫຼີກລ່ຽງໄດ້, ຄວນມີການຈໍາກັດໃຫ້ນ້ອຍທີ່ສຸດ ແລະ ມີມາດຕະການທີ່ເໝ າະສົມເພື່ອຫຼຸດຜ່ອນຜົນກະທົບທີ່ບໍ່ດີຕໍ່ຜູ້ທີ່ຖືກຍົກຍ້າຍ ແລະ ຊຸມຊົນເຈົ້າພາບ ຄວນໄດ້ຮັບການວາງແຜນ ແລະ ຈັດຕັ້ງປະຕິບັດຢ່າງລະມັດລະວັງ. ແຜນການຍົກຍ້າຍຈັດສັນ ຄວນໄດ້ຮັບການປະຕິບັດໂດຍອີງໃສ່ ຜົນຂອງການປະເມີນຜົນກະທົບທາງສັງຄົມ, ແລະ ໂດຍພິຈາລະນາ ຫຼັກການພື້ນຖານ ແລະ ຂໍ້ແນະນໍາ ກ່ຽວກັບການຍົກຍ້າຍ ໂດຍອີງໃສ່ການພັດທະນາ ຂອງ ສໍານັກງານຂ້າຫຼວງໃຫຍ່ເພື່ອສິດທິມະນຸດ ຂອງ ອົງການສະຫະປະຊາຊາດ ແລະ ມາດຕະຖານການປະຕິບັດທີ 5 ຂອງ IFC ກ່ຽວກັບການຈັດຫາທີ່ດິນ ແລະ ການຍົກຍ້າຍຈັດສັນແບບ ບໍ່ສະໝັກໃຈ. . ແຜນການຍົກຍ້າຍຈັດສັນຄວນໄດ້ຮັບການຕົກລົງເຫັນດີ ຈາກຊຸມຊົນທີ່ກ່ຽວຂ້ອງພາຍໃຕ້ຂະບວນການ FPIC ແລະ ຄວນຈະລວມເອົາໂອກາດ ສ□າລັບການຈ້າງ ແຮງງານຢູ່ໃນຟາມ ແລະ ນອກຟາມ ແລະ ການຝຶກອົບຮົມທັກສະໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໂຄງການ.
    - ຮັກສາລະບົບ ເປັນທໍາ ແລະ ໂປ່ງໃສ ໃນການລະບຸສິດກ່ຽວກັບທີ່ດິນ ໃນທາງທີ່ປົກປ້ອງຜູ້ຖືສິດຄອບຄອງ ນໍາໃຊ້ທີ່ຊອບທໍາ ແລະ ເຂດອະນຸລັກຕ່າງໆ, ລວມທັງຜ່ານການນໍາໃຊ້ເຕັກໂນໂລຊີ ເຊັ່ນ ເຕັກໂນໂລຊີ ລະບົບກໍານົດຕໍາແໜ່ງທົ່ວໂລກ (GPS) ຫຼື ຂໍ້ມູນດາວທຽມ, ໃນບ່ອນທີ່ເໝາະສົມ.

ບົດແນະນຳທີ 5: ປົກປັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ, ໂດຍສະເພາະປ່າໄມ້ຂອງອາຊຽນ

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນປະກອບສ່ວນເຂົ້າໃນການອະນຸລັກ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ໂດຍສະເພາະຊັບພະຍາກອນປ່າໄມ້ຂອງອາຊຽນ, ໂດຍ:
  - ປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບທາງລົບຕໍ່ອາກາດ, ທີ່ດິນ, ດິນ, ແຫຼ່ງນ້ຳ ທັງໃນແຜ່ນດິນໃຫຍ່ ແລະ ນອກຊາຍຝັ່ງ, ປ່າໄມ້, ດິນທາມ, ທີ່ຢູ່ອາໄສ ແລະ ຊີວະນາໆພັນ, ໂດຍອີງໃສ່ຄວາມຕ້ອງການສະເພາະຂອງເຂດທີ່ມີຄວາມອ່ອນໄຫວ ແລະ ເຂດສະຫງວນ.
  - ສະໜັບສະໜູນ ປະຕິບັດການຄຸ້ມຄອງປ່າໄມ້ແບບຍືນຍົງ, ລວມທັງການຄຸ້ມຄອງປ່າໄມ້ຊຸມຊົນ, ພ້ອມທັງການປ້ອງກັນອັກຄີໄພ ແລະ ການຄວບຄຸມ ໝອກ ຄວັນຂ້າມແດນ. ການສະໜັບສະໜູນນີ້ຄວນຮັບຮູ້ເຖິງຄຸນຄ່າທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ນິເວດວິທະຍາຂອງປ່າໄມ້ຂອງອາຊຽນ ແລະ ການປະກອບສ່ວນຂອງມັນຕໍ່ຊີວະນາໆພັນ ແລະ ວົງຈອນກາກບອນ. ຍັງຄວນເຄົາລົບບົດບາດທີ່ເປັນເອກະລັກຂອງປ່າໄມ້ ໃນການໃຫ້ບໍລິການລະບົບນິເວດທີ່ສຳຄັນເຊັ່ນ: ຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພດ້ານພະລັງງານ ແລະ ຄວາມຕ້ອງການດ້ານຢາປົວພະຍາດ. ນີ້ແມ່ນສອດຄ່ອງກັບວິໄສທັດ ແລະ ແຜນຍຸດທະສາດ ສຳລັບການຮ່ວມມືອາຊຽນໃນ FAF ແລະ ແຜນຍຸດທະສາດຂອງການປະຕິບັດງານເພື່ອການຮ່ວມມືອາຊຽນກ່ຽວກັບປ່າໄມ້ (2016 - 2025).
  - ສ້າງຄວາມສົມດຸນສຳລັບຈຸດປະສົງທາງດ້ານເສດຖະກິດ ແລະ ຄວາມຕ້ອງການທີ່ຈະເພີ່ມການຜະລິດ ກັບຈຸດປະສົງເພື່ອການອະນຸລັກ ແລະ ຄວາມຕ້ອງການຂອງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ, ເພື່ອພັດທະນາລະບົບການຄຸ້ມຄອງຊັບພະຍາກອນທີ່ມີຄວາມຍືນຍົງດີກວ່າເກົ່າເພື່ອສະໜັບສະໜູນ ແລະ ອະນຸລັກ ຊີວະນາໆພັນ ແລະ ຊັບພະຍາກອນພັນທຸກຳ.
  - ສະໜັບສະໜູນການສະໜອງຊັບພະຍາກອນທີ່ຍືນຍົງ ແລະ ການຍັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຄວບຄຸມ ແລະ ສະແດງໃຫ້ເຫັນຄວາມຕ້ອງການທີ່ເພີ່ມຂຶ້ນ, ໂດຍສະເພາະໃນກຸ່ມຄົນຊັ້ນກາງຂອງອາຊຽນ ທີ່ກຳລັງຂະຫຍາຍຕົວ, ສຳລັບຜະລິດຕະພັນ FAF ທີ່ຜລິດແບບຍືນຍົງ.
  - ຫຼຸດຜ່ອນການສູນເສຍ ແລະ ສິ່ງເສດເຫຼືອ ກ່ອນ ແລະ ຫຼັງການເກັບກ່ຽວ, ການເພີ່ມປະສິດທິພາບການຜະລິດ, ແລະ ການນ□າໃຊ້ສິ່ງເສດເຫຼືອ ແລະ ຜະລິດຕະພັນຊ້ອນ ຢ່າງມີປະສິດທິພາບ, ລວມທັງການລົງທຶນໃນພື້ນຖານໂຄງລ່າງການຂົນສົ່ງ ແລະ ການເກັບຮັກສາ, ການຮ່ວມມື ສຳລັບການກະຈາຍເຕັກໂນໂລຊີ ແລະ ການຄົ້ນຄວ້າ.
  - ສົ່ງເສີມການຊົມໃຊ້ທີ່ຍືນຍົງໂດຍການກະຕຸກຊຸກຍູ້ການວາງແຜນຫຼຸດຜ່ອນການຜະລິດສິ່ງເສດເຫຼືອ, ນຳໃຊ້ການຫຸ້ມຫໍ່ທີ່ເປັນມິດກັບສິ່ງແວດລ້ອມ ແລະ ການຍືດວົງຈອນຊີວິດ ຂອງຜະລິດຕະພັນ ໃຫ້ຍາວຂຶ້ນ.
  - ການຈັດຕັ້ງສະຖາບັນ ແລະ ລະບົບການປົກຄອງ ແລະ ການວາງແຜນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ, ໂດຍມີພື້ນທີ່ພຽງພໍ ສຳລັບການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ ໃນການຕັດສິນໃຈ, ແລະ ຮັບປະກັນວ່າການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ຍັ້ງຢືນ ແລະ ສ້າງຄວາມເຂັ້ມແຂງໃຫ້ສະຖາບັນ ແລະ ລະບົບການປົກຄອງເຫຼົ່ານີ້, ບໍ່ແມ່ນທ□າລາຍ.
- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ຮັບປະກັນລະບົບການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ກວມລວມ, ໂດຍອີງໃສ່ກົດໝາຍ ການຄຸ້ມຄອງຊັບພະຍາກອນທີ່ມີຢູ່, ພ້ອມທັງການປະຕິບັດທີ່ດີ ແລະ ຄວາມຮູ້ຂອງຊຸມຊົນທ້ອງຖິ່ນ, ເພື່ອຄຸ້ມຄອງການພັດທະນາພື້ນຖານໂຄງລ່າງ, ການເຂົ້າເຖິງ ແລະ ນຳໃຊ້, ລວມທັງ:
    - ກຳນົດຫຼັກການໃນການຄຸ້ມຄອງນ້ຳ ໃນຖານະເປັນແຫລ່ງເສດຖະກິດທີ່ຂາດແຄນ ເພື່ອບັນລຸການນຳໃຊ້ທີ່ມີປະສິດທິພາບ ແລະ ສະເໝີພາບ, ແລະ ຮັບປະກັນການອະນຸລັກ ແລະ ປົກປັກຮັກສາຊັບພະຍາກອນນ້ຳ.

        - ຮັບປະກັນການເຂົ້າເຖິງນ້ຳ ໃຫ້ສອດຄ່ອງກັບພັນທະສິດທິມະນຸດ ແລະ ພັນທະດ້ານການພັດທະນາ, ໂດຍລັດຖະບານຍັງຮັກສາຄວາມຮັບຜິດຊອບ ຫຼັກໃນການຈັດສົ່ງນ້ຳ ແລະ ສຸຂະອະນາໄມ ສຳລັບປະຊາກອນຂອງຕົນ, ແລະ ບໍ່ອີງໃສ່ຜູ້ລົງທຶນເອກະຊົນ ຢ່າງດຽວໃນການໃຫ້ບໍລິການສາທາລະນະ.
        - ພັດທະນາແຜນປ່າໄມ້ແຫ່ງຊາດທີ່ແກ້ໄຂການລົງທຶນຢ່າງຈະແຈ້ງ ເນື່ອງຈາກມັນກ່ຽວຂ້ອງກັບ ແລະ ມີຜົນກະທົບຕໍ່ບັນຫາປ່າໄມ້ທີ່ສຳຄັນ ເຊັ່ນ: ການອະນຸລັກ, ຊະນິດພັນທີ່ຮຸກຮານ, ການຕັດໄມ້ຜິດກົດໝາຍ, ໄຟໄໝ້ປ່າ ແລະ ສັດປ່າ.
        - ສະໜັບສະໜູນຂັ້ນຕອນການແບ່ງຂັ້ນຄຸ້ມຄອງປ່າໄມ້ ແລະ ຄວາມຮັບຜິດຊອບ.
        - ໃນກໍລະນີທີ່ຈຳເປັນ, ນຳໃຊ້ລະບຽບການສະເພາະເພື່ອຄຸ້ມຄອງເຂດທີ່ມີຄວາມອ່ອນໄຫວ ແລະ ສຳຄັນ ແລະ ເຂດປ້ອງກັນ.
        - ສະໜອງ ການປະສານງານລະຫວ່າງກະຊວງ, ການກຳນົດມາດຕະຖານ, ການວາງແຜນ ແລະ ການຕິດຕາມ, ລະຫວ່າງກະຊວງທີ່ກ່ຽວຂ້ອງເຊັ່ນກະສິກຳ, ປ່າໄມ້, ສິ່ງແວດລ້ອມ ແລະ ນ້ຳ.
    - ການສົ່ງເສີມຊີວິດການເປັນຢູ່ ທີ່ເປັນທາງເລືອກໃນພື້ນທີ່ປ່າໄມ້ໂດຍຜ່ານກິດຈະກຳ ການຖ່າຍທອດຄວາມຮູ້ທີ່ມີຊຸມຊົນເຂົ້າຮ່ວມນຳ, ພ້ອມທັງສະໜັບສະໜູນຊຸມຊົນໃນການປູກພືດ ແລະ ນຳໃຊ້ວິທີການກະເສດອື່ນໆທີ່ຊ່ວຍປ້ອງກັນການເຊາະເຈື່ອນຂອງດິນ ແລະ ການເຊື່ອມໂຊມຂອງດິນອື່ນໆ.

**<u>ຄຳແນະນຳທີ 6:</u> ສະໜັບສະໜູນການຜະລິດ ແລະ ການກະຈາຍເຕັກໂນໂລຊີ ແລະ ການປະຕິບັດທີ່ມີຄວາມຍືນຍົງ ແລະ ເໝາະສົມ ສຳລັບລະບົບ FAF ທີ່ມີປະສິດທິພາບ, ຜະລິດຕະພັນ ແລະ ປອດໄພ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນສະໜັບສະໜູນການຜະລິດ ແລະ ການ ກະຈາຍ ເຕັກໂນໂລຊີ ແລະ ການປະຕິບັດທີ່ຍືນຍົງ ສຳລັບລະບົບ FAF ທີ່ມີປະສິດທິພາບ, ຜະລິດຕະພັນ ແລະ ປອດໄພໂດຍ:
    - ການລົງທຶນໃນໂຄງລ່າງ R&D ທີ່ຈຳເປັນ, ຄວາມສາມາດຂອງມະນຸດ, ແລະ ການສົ່ງເສີມ “ທົດລອງເພື່ອຈັບຍາບັນ” ສ□າລັບທັງການຜະລິດ ແລະ ການແຜ່ກະຈາຍຂອງເຕັກໂນໂລຊີຕະຫຼອດຕ່ອງໂສ້ມູນຄ່າ FAF, ລວມທັງການຈັດເຕັກໂນໂລຍີຕ່າງປະເທດໃຫ້ດີກວ່າເກົ່າກັບຄວາມຕ້ອງການ ແລະ ຂໍ້ຈຳກັດຂອງທ້ອງຖິ່ນ.
    - ຮັບຮອງເອົາ ແລະ ສະໜັບສະໜູນນະໂຍບາຍ, ລະບຽບການ ແລະ ການຈັດວາງສະຖາບັນທີ່ເປັນກຳລັງຊຸກຍູ້ການພັດທະນາ, ການຄ້າ ແລະ ການແຈກຢາຍເຕັກໂນໂລຊີ, ໃນການປະຕິບັດວິໄສທັດ ແລະ ແຜນຍຸດທະສາດ ສຳລັບການຮ່ວມມືອາຊຽນໃນ FAF. ແລະ ພ້ອມດຽວກັນໃຫ້ການພິຈາລະນາເຖິງເຕັກໂນໂລຊີທີ່ເພີ່ມສະມັດຕະພາບການຜະລິດ, ປັບປຸງປະສິດທິພາບໃນການຄຸ້ມຄອງ ແລະ ນຳໃຊ້ວັດຖຸດິບ, ຊັບພະຍາ ກອນທຳມະຊາດ, ພະລັງງານ, ແລະ ສິ່ງເສດເຫຼືອ.
    - ການສົ່ງເສີມການຮ່ວມມື ແລະ ການປະສານງານລະຫວ່າງ AMS ສຳລັບ R&D, ລວມທັງການສ້າງໂຄງປະກອບອາຊຽນທີ່ມີຢູ່ເພື່ອການແລກປ່ຽນຄວາມຮູ້, ແລະ ນ□າໃຊ້ການລົງທຶນຂອງພາກເອກະຊົນໃນການປະດິດສ້າງຜ່ານ PPPs ຍຸດທະສາດ, ສອດຄ່ອງກັບຂອບເຂດພາກພື້ນເພື່ອການພັດທະນາເຕັກໂນໂລຊີໃນ ຂະແໜງ FAF.
    - ສະໜັບສະໜູນການເປັນຫຸ້ນສ່ວນຂອງພາກເອກະຊົນ ແລະ ການນຳໃຊ້ຮູບແບບທຸລະກິດລວມເພື່ອກະຕຸກຊຸກຍູ້ການໂອນເຕັກໂນໂລຊີ ຈາກນັກລົງທຶນເອກະຊົນຂະໜາດໃຫຍ່ ໄປສູ່ຊາວກະສິກອນຂະໜາດນ້ອຍ ແລະ SME.
    - ສ້າງຄວາມເຂັ້ມແຂງໃຫ້ເວທີແລກປ່ຽນຂໍ້ມູນຂ່າວສານ, ການປ່ຽນແປງໃໝ່ ແລະ ການແລກປ່ຽນຄວາມຮູ້ລະຫວ່າງພາກເອກະຊົນ, ນັກວິທະຍາສາດ, ສະຖາບັນຄົ້ນຄວ້າ, ຊາວກະສິກອນ ແລະ ພາກສ່ວນມີສ່ວນຮ່ວມ ອື່ນໆ.

- ການຮັບຮູ້ຄວາມສໍາຄັນ ແລະ ການປະກອບສ່ວນຂອງຄວາມຮູ້ ແລະ ເຕັກໂນໂລຊີແບບດັ້ງເດີມເພື່ອສົ່ງເສີມລະບົບ FAF ທີ່ມີປະສິດທິພາບ, ຜະລິດຕະພັນ ແລະ ປອດໄພ, ແລະ ຮັບປະກັນສິດຊັບສິນທາງປັນຍາລວມທີ່ເກີດຂຶ້ນຈາກຄວາມຮູ້ ແລະ ເຕັກໂນໂລຊີແບບດັ້ງເດີມດັ່ງກ່າວໄດ້ຖືກຮັບຮູ້ ແລະ ສະໜັບສະໜູນ.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ການພັດທະນາທັກສະ ແລະ ການຮັບສະໝັກພະນັກງານທີ່ມີຄວາມຊໍານານໃນການຄ້າເຕັກໂນໂລຊີ ແລະ ການພັດທະນາ PPP ໃນ FAF.
  - ສະໜັບສະໜູນການສ້າງ ແລະ ຮັບຮອງເອົາເຕັກໂນໂລຊີ ໃໝ່ ໂດຍການສ້າງລະບົບປະດິດສ້າງລະດັບຊາດ ແລະ ພາກພື້ນ, ເຊິ່ງພົວພັນກັບລັດຖະບານ, ອົງການ NGO, ພາກເອກະຊົນ ແລະ ຜູ້ຕາງ ໜ້າ ຂະໜາດນ້ອຍ.
  - ການສະໜອງ ທຶນ ຫຼື ການອຸດໜູນການຈັດຊື້ເຕັກໂນໂລຊີໃໝ່ ໃນເບື້ອງຕົ້ນ ສໍາລັບຜູ້ຜະລິດຂະໜາດນ້ອຍ ແລະ SME, ເພື່ອຫຼຸດຜ່ອນຕົ້ນທຶນໃນເບື້ອງຕົ້ນ ແລະ ຄວາມກ້າວ ໜ້າ ທາງດ້ານເຕັກໂນໂລຊີໃນປະເທດ. ໂດຍສຸມໃສ່, ໂດຍສະເພາະກ່ຽວກັບເຕັກໂນໂລຊີທີ່ເໝາະສົມເພື່ອຊ່ວຍຜູ້ຜະລິດຂະໜາດນ້ອຍ ແລະ SME ປັບປຸງສະມັດຕະພາບ ແລະ ຄຸນນະພາບຂອງຜະລິດຕະພັນ, ປະຕິບັດຕາມມາດຕະຖານຕະຫລາດສາກົນ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນ.
  - ການພັດທະນາຄວາມສາມາດໃນການຄັດເລືອກ ແລະ ເລືອກການລົງທຶນທີ່ແນະນໍາເຕັກໂນໂລຊີທີ່ຍືນຍົງເພື່ອປະກອບສ່ວນເຂົ້າໃນການເຕີບໃຫຍ່ ແລະ ການພັດທະນາແບບຍືນຍົງຂອງປະເທດ.
  - ພະນັກງານລັດທີ່ມີຄວາມຊໍານິຊໍານານເຂົ້າໄປໃນອົງກອນອຸດສາຫະກໍາເພື່ອໃຫ້ການສະໜັບສະໜູນດ້ານວິຊາການສະເພາະດ້ານວິສາຫະກິດ ຫຼື ພົດພັນແກ່ຜູ້ປູກຂະໜາດນ້ອຍ.
  - ເຊື່ອມໂຍງສະຖາບັນຄົ້ນຄ້ວາກະສິກໍາ ແລະ ອົງການ NGO ທີ່ກ່ຽວຂ້ອງກັບການພັດທະນາ ແລະ ເຜີຍແຜ່ເຕັກໂນໂລຊີກັບນັກລົງທຶນທີ່ໃຫຍ່ກວ່າເພື່ອຊຸກຍູ້ຄວາມພະຍາຍາມຂອງທຸກຝ່າຍເພື່ອຜົນປະໂຫຍດຂອງຜູ້ທີ່ມີຂະໜາດນ້ອຍ.
  - ສ້າງສະພາບແວດລ້ອມທີ່ ອໍານວຍໃຫ້ແກ່ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນການຖ່າຍທອດຄວາມຮູ້, ການຜະລິດເຕັກໂນໂລຊີກະສິກໍາ ແລະ ການພັດທະນາຊັບພະຍາກອນມະນຸດ.
  - ກໍານົດກອບກົດໝາຍ ແລະ ນະໂຍບາຍທີ່ມີປະສິດທິຜົນ ສໍາລັບສິດທິຊັບສິນທາງປັນຍາ, ລວມທັງການອະນຸມັດດ້ານລະບຽບການທີ່ມີປະສິດທິຜົນ ສໍາລັບເຕັກໂນໂລຊີ, ຜະລິດຕະພັນ ແລະ ຂັ້ນຕອນໃໝ່ເພື່ອໃຫ້ເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ລ້າສຸດສາມາດຮັບຮອງເອົາໄດ້ງ່າຍ.

**<u>ບົດແນະນໍາທີ 7:</u> ເພີ່ມຄວາມຕ້ານທານ ແລະ ປະກອບສ່ວນໃນການຫຼຸດຜ່ອນ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ໄພພິບັດທໍາມະຊາດ ແລະ ຜົນກະທົບອື່ນໆ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນເພີ່ມຄວາມຕ້ານທານ ແລະ ປະກອບສ່ວນໃນການຫຼຸດຜ່ອນ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ໄພພິບັດທໍາມະຊາດ, ແລະ ຜົນກະທົບອື່ນໆໂດຍ:
  - ໂດຍຮັບຮູ້ວ່າຂະແໜງການ FAF ມີທ່າແຮງອັນໃຫຍ່ຫຼວງໃນການປະກອບສ່ວນເຂົ້າໃນມາດຕະການຮັບມືກັບການປ່ຽນແປງດິນຟ້າອາກາດ. ສິ່ງນີ້ລວມມີໂດຍຜ່ານການຫລົ້ມຈົມກາກບອນ, ການປູກປ່າຄືນໃໝ່ ແລະ ການອະນຸລັກປ່າໄມ້ທໍາມະຊາດ, ໃນບັນດາການເຊື່ອມໂຍງອື່ນໆ. ຖ້າເຮັດແບບນັ້ນ, ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ຈະສະໜັບສະໜູນ ກອບພາຫຸຂະແໜງການ ກ່ຽວກັບການປ່ຽນແປງດິນຟ້າອາກາດ: ກະສິກໍາ ແລະ ປ່າໄມ້ ເພື່ອມຸ່ງໄປສູ່ຄວາມໝັ້ນຄົງດ້ານສະບຽງອາຫານ.
  - ພັດທະນາ, ທົດສອບ ແລະ ປັບປຸງມາດຕະການປັບຕົວເຂົ້າກັບດິນຟ້າອາກາດ ແລະ ຍຸດທະສາດທີ່ມີປະສິດທິພາບ, ມີປະສິດທິພາບ ແລະ ເໝາະສົມ ສໍາລັບຄວາມຕ້ານທານກັບດິນຟ້າອາກາດ, ໃຫ້ສົມບູນຕາມບົດ

ແນະນຳໃນພາກພື້ນອາຊຽນ ກ່ຽວກັບການສົ່ງເສີມການປະຕິບັດທີ່ສະຫຼາດດ້ານສະພາບອາກາດ ກ່ຽວກັບການກະສິກຳ.

- ຊຸກຍູ້ການພັດທະນາຜະລິດຕະພັນປ້ອງກັນຄວາມສ່ຽງດ້ານການເງິນ ສຳລັບຜູ້ຜະລິດຂະໜາດນ້ອຍ ແລະ SME ກ່ຽວກັບໄພພິບັດທາງທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ, ລວມທັງຜ່ານ PPPs ຍຸດທະສາດ, ສອດຄ່ອງກັບແຜນຜັງຊຸມຊົນວັດທະນະ ທຳ - ສັງຄົມອາຊຽນ 2025.
- ຮັບຮູ້, ເຄົາລົບ ແລະ ສົ່ງເສີມຄວາມຮູ້ ແລະ ການປະຕິບັດພື້ນເມືອງ ແລະ ແບບດັ້ງເດີມໃນມາດຕະການຄຸ້ມຄອງພືດແບບຍືນຍົງ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ວິທີການອື່ນໆຂອງການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນ FAF.
- ຮັບຮູ້ ແລະ ຕອບສະໜອງ ຕໍ່ຄວາມສ່ຽງທີ່ສູງຂອງແມ່ຍິງ, ຊາວໜຸ່ມ, ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ, ແຮງງານອົບພະຍົບ, ກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດອື່ນໆລວມທັງຜູ້ທີ່ອາໄສຢູ່ໃນເຂດສ່ຽງ.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ເພີ່ມກອງທຶນສາທາລະນະໃຫ້ແກ່ການຄົ້ນຄວ້າ ແລະ ຂະຫຍາຍການບໍລິການເພື່ອສະໜັບສະໜູນການຫຼຸດຜ່ອນ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ລວມທັງຜ່ານ:
    - ເພີ່ມການລົງທຶນໃສ່ເຕັກໂນໂລຊີການຫຼຸດຜ່ອນ ແລະ ການປັບຕົວ, ລວມທັງການພັດທະນາແນວພັນທີ່ທົນທານຕໍ່ດິນຟ້າອາກາດ.
    - ສ້າງຂີດຄວາມສາມາດຂອງເຈົ້າໜ້າທີ່ລັດຖະບານ, ຜູ້ຜະລິດຂະໜາດນ້ອຍ, SME ແລະ ຊຸມຊົນທ້ອງຖິ່ນເພື່ອເຜີຍແຜ່ ແລະ ນຳໃຊ້ການຄົ້ນຄວ້າທີ່ມີຄຸນນະພາບສູງຜ່ານປະສົບການຂອງອາຊຽນ.
  - ພັດທະນາກອບກົດໝາຍ ແລະ ນະໂຍບາຍເພື່ອດຶງດູດພາກເອກະຊົນໃຫ້ຊອກຫາຜະລິດຕະພັນ ແລະ ການບໍລິການປະກັນໄພທີ່ຫລາກຫລາຍ ແລະ ມີລັກສະນະພິເສດທີ່ພິຈາລະນາຄວາມສ່ຽງທີ່ເກີດຂຶ້ນຈາກຄວາມຖີ່ຂອງໄພແຫ້ງແລ້ງ, ນໍ້າຖ້ວມ ແລະ ເຫດການທີ່ກ່ຽວຂ້ອງກັບດິນຟ້າອາກາດທີ່ຮ້າຍແຮງອື່ນໆ, ໂດຍສຸມໃສ່ບົດບາດຂອງ ICT ຍ້ອນວ່າ 90 ສ່ວນຮ້ອຍຂອງ 100 ບໍລິສັດ ICT ທີ່ໃຫຍ່ທີ່ສຸດໃນໂລກມີຢູ່ໃນອາ ຊຽນ.
  - ກຳນົດພື້ນທີ່ສະເພາະຂອງກິດຈະກຳ ທີ່ຈຳເປັນໃນການປະຕິບັດມາດຕະການການປ່ຽນແປງດິນຟ້າອາກາດ ແລະ ກະຕຸກຊຸກຍູ້ໃຫ້ຜູ້ຮັກສາເຮືອນເອົາໃຈໃສ່ຢ່າງພຽງພໍຕໍ່ພວກກ່ຽວ.

**<u>ບົດແນະນຳທີ 8:</u> ເຄົາລົບລະບຽບກົດໝາຍ ແລະ ລວມເອົາໂຄງສ້າງ, ຂະບວນການ ແລະ ກົນໄກການຮ້ອງທຸກທີ່ມີຄວາມໂປ່ງໃສ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນຄວນເຄົາລົບລະບຽບກົດໝາຍ ແລະ ລວມເອົາໂຄງສ້າງ, ຂັ້ນຕອນ ແລະ ກົນໄກການຮ້ອງທຸກທີ່ມີຄວາມໂປ່ງໃສໂດຍ:
  - ປະຕິບັດຕາມກົດໝາຍ ຂອງຊາດດ້ວຍຈິດ ໝາຍ ແລະ ດ້ວຍຈິດໃຈ;
  - ຫຼີກລ່ຽງການມີສ່ວນຮ່ວມໃນການປະຕິບັດ ແລະ ການໃຫ້ສິນບົນ;
  - ການແບ່ງປັນຂໍ້ມູນທີ່ກ່ຽວຂ້ອງກັບການລົງທຶນຢ່າງເປັນຮູບປະທຳ, ເຂົ້າເຖິງ, ແລະ ໂປ່ງໃສໃນທຸກຂັ້ນຕອນຂອງວົງຈອນການລົງທຶນ, ເພື່ອໃຫ້ລະດັບສະໜາມຫຼິ້ນລະຫວ່າງນັກລົງທຶນ ແລະ ຊຸມຊົນທີ່ຖືກກະທົບ, ຫຼຸດຜ່ອນຂໍ້ຂັດແຍ່ງທີ່ອາດເກີດຂຶ້ນ, ແລະ ອ□ານວຍຄວາມສະດວກໃນການຕິດຕາມກວດກາໂຄງການລົງທຶນ ແລະ ການປະຕິບັດຕາມຂໍ້ຕົກລົງຕາມສັນຍາ ແລະ ກັບຊຸມຊົນ;
  - ການສົ່ງເສີມການເຂົ້າເຖິງກົນໄກການໄກ່ເກ່ຍ, ການຮ້ອງທຸກ, ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງທີ່ໂປ່ງໃສ

ແລະ ມີປະສິດທິຜົນ, ລວມທັງການເຄົາລົບການປົກຄອງແບບດັ້ງເດີມ ແລະ ກົນໄກການຮ້ອງທຸກ ແລະ ຂະບວນການກົດໝາຍ ປະເພນີ ສໍາລັບການແກ້ໄຂຂໍ້ຂັດແຍ້ງ, ໂດຍສະເພາະກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ, ຊົນເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ.

  - ປະຕິບັດເພື່ອແກ້ໄຂບັນຫາຄົງຄ້າງ, ຍົກຕົວຢ່າງໂດຍຜ່ານກົນໄກການຮ້ອງທຸກຂັ້ນຕົ້ນ, ການທົບທວນຄືນສັນຍາທີ່ຜ່ານມາ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ລວມທັງການພິຈາລະນາຜົນກະທົບດ້ານວັດທະນະທໍາ) ຫຼື ການປະເມີນທີ່ດິນທີ່ເປັນເອກະລາດໃນສະຖານະການຫລັງການຂັດແຍ້ງ.
  - ປຶກສາຫາລືຢ່າງມີຄວາມໝາຍ ແລະ ມີຄວາມຮັບຜິດຊອບກັບກຸ່ມ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບຈາກການຕັດສິນໃຈດ້ານການລົງທຶນ, ກ່ຽວກັບຄວາມບໍ່ສະດວກດ້ານພະລັງງານ, ເພື່ອຮັບປະກັນການມີສ່ວນຮ່ວມຢ່າງຫ້າວຫັນ, ມີປະສິດທິພາບ, ແທ້ຈິງ ແລະ ມີຂໍ້ມູນໃນການຕັດສິນໃຈເຫຼົ່ານັ້ນ. ນີ້ລວມທັງການຊອກຫາຄວາມເຫັນດີເຫັນພ້ອມຈາກປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ຕາມສິດຂອງເຂົາເຈົ້າທີ່ຈະໄດ້ຮັບຄວາມເຫັນດີເປັນອິດສະຫຼະ, ແຈ້ງກ່ອນ ແລະ ແຈ້ງຕະຫຼອດໄລຍະການລົງທຶນ. ຫຼັກການນີ້ຮັບຮູ້ວ່າຂັ້ນຕອນການປຶກສາຫາລືຄວນໄດ້ຮັບການແບ່ງແຍກຕາມຂະໜາດ ຂອງການລົງທຶນ;
  - ສົ່ງເສີມນະໂຍບາຍ, ກົດໝາຍ, ກົດລະບຽບ, ແລະ ສະພາບແວດລ້ອມຂອງສະຖາບັນ, ທີ່ປະຕິບັດຕໍ່ນັກລົງທຶນ FAF ທຸກຄົນຢ່າງຍຸຕິທໍາ ແລະ ສະເໝີພາບ, ແລະ ນັ້ນແມ່ນຄວາມໂປ່ງໃສ, ຮ່ວມກັນ, ສອດຄ່ອງ ແລະ ສາມາດຄາດເດົາໄດ້.

- ເພື່ອບັນລຸເປົ້າໝາຍດັ່ງກ່າວ, AMS ອາດຈະພິຈາລະນາ:
  - ສ້າງແນວທາງໃນການລາຍງານ ແລະ ການເປີດເຜີຍຂໍ້ມູນເປັນແຕ່ລະໄລຍະ, ລວມທັງ:
    - ເຜີຍແຜ່ລາຍລະອຽດຂອງນັກລົງທຶນທີ່ຈະມາເຖິງ (ຊື່, ຫ້ອງການທີ່ຈົດທະບຽນ ແລະ ຕິດຕໍ່), ຂໍ້ມູນກ່ຽວກັບຂັ້ນຕອນການປະມູນ ແລະ ການຄັດເລືອກ, ພ້ອມທັງລາຍລະອຽດຂອງໂຄງການທີ່ມີທ່າແຮງເຊັ່ນນະໂຍບາຍສົ່ງເສີມໃນການສະ ເໜີ.
    - ຮັບປະກັນເອກະສານ ແລະ ຂໍ້ມູນຂ້າງເທິງນັ້ນແມ່ນຖືກຕ້ອງ, ຖືກເຜີຍແຜ່ກ່ອນ ແລະ ຮັກສາໃຫ້ທັນສະໄໝ ຕະຫຼອດຊີວິດຂອງໂຄງການລົງທຶນ.
    - ເຮັດໃຫ້ຂໍ້ມູນທີ່ຖືກເປີດເຜີຍສາມາດເຂົ້າເຖິງໄດ້ ສໍາລັບທຸກພາກສ່ວນທີ່ກ່ຽວຂ້ອງ, ພິຈາລະນາຄວາມຫຼາກຫຼາຍ ແລະ ລະດັບຄວາມເຂົ້າໃຈຂອງຕົນ, ຍົກຕົວຢ່າງໂດຍການພັດທະນາບົດສະຫຼຸບທີ່ງ່າຍໆໃນພາສາທ້ອງຖິ່ນ.
    - ຮັບປະກັນວ່າຂໍ້ມູນ, ເອກະສານ ແລະ ບັນຫາການຮ້ອງທຸກທີ່ກ່ຽວຂ້ອງກັບການລົງທຶນທີ່ມີຢູ່ (ຫຼື ດິນຕອນທີ່ບໍ່ມີການລົງທຶນໃນອະດີດ) ໃຫ້ແກ່ນັກລົງທຶນໃນອະນາຄົດ.
    - ຮັບປະກັນຄວາມສອດຄ່ອງຂອງມາດຕະຖານການລາຍງານລະຫວ່າງນັກລົງທຶນຂະໜາດນ້ອຍ ແລະ ໃຫຍ່, ເພື່ອຊ່ວຍໃນການປຽບທຽບຂໍ້ມູນທີ່ລາຍງານ.
  - ສ້າງຄວາມເຂັ້ມແຂງໃນການເຂົ້າເຖິງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງເພື່ອສະໜັບສະໜູນການບໍລິການດ້ານກົດໝາຍ ແລະ ການຊ່ວຍເຫຼືອດ້ານກົດໝາຍ.
  - ໃຫ້ບົດແນະນໍາສໍາລັບນັກລົງທຶນກ່ຽວກັບການປະຕິບັດ ແລະ ຂະບວນການທີ່ດີ ສໍາລັບການດໍາເນີນການປຶກສາຫາລື ແລະ ການເຈລະຈາຊຸມຊົນ, ຕິດຕາມນັກລົງທຶນເພື່ອຮັບປະກັນວ່າພວກກ່ຽວມີສ່ວນພົວພັນ ແລະ ເຈລະຈາຢ່າງມີຄວາມໝາຍ ກັບຊຸມຊົນທີ່ຖືກກະທົບ, ລວມທັງການຕິດຕາມກວດກາການນໍາໃຊ້ກົນໄກແກ້ໄຂຂໍ້ຂ້ອງໃຈ, ຊຸມຊົນໄດ້ຮັບການແກ້ໄຂ.
  - ຮັບປະກັນການເຂົ້າເຖິງວິທີການແກ້ໄຂທີ່ມີປະສິດທິພາບ, ລາຄາບໍ່ແພງຜ່ານສານ ຫຼື ຂະບວນການທີ່ບໍ່ແມ່ນກົດໝາຍ ອື່ນໆ, ບ່ອນທີ່ກົນໄກແກ້ໄຂການຮ້ອງທຸກບໍ່ສາມາດແກ້ໄຂການຮ້ອງທຸກໄດ້.
  - ສະໜັບສະໜູນນະໂຍບາຍ, ກົດໝາຍ, ລະບຽບການ, ແລະ ສະພາບແວດລ້ອມທີ່ເໝາະສົມ ສ□າລັບນັກ

ລົງ ທຶນ FAF, ລວມທັງໂດຍ:

- ເຮັດໃຫ້ການມີສ່ວນຮ່ວມທີ່ມີຄວາມໝາຍຂອງບັນດາພາກສ່ວນມີສ່ວນຮ່ວມໃນການສ້າງນະໂຍບາຍການລົງທຶນຂອງ FAF, ແລະ ເປີດໂອກາດໃຫ້ຄ□າຄິດເຫັນ ແລະ ການສົນທະນາກ່ຽວກັບການປະຕິບັດກົດໝາຍ ແລະ ນະໂຍບາຍ;
- ປັບປຸງການປະສານງານ ແລະ ການສື່ສານລະຫວ່າງຂັ້ນຕ່າງໆຂອງລັດຖະບານ;
- ສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ການບໍລິການ, ນະໂຍບາຍສົ່ງເສີມ, ຊັບພະຍາກອນ, ອົງການຈັດ ຕັ້ງຂອງລັດຖະບານ ແລະ ການປະຕິບັດກົດໝາຍ ແລະ ກົດໝາຍ ທີ່ບໍ່ມີການຈໍາແນກຢ່າງຖືກຕ້ອງຕາມກົດໝາຍຂອງຊາດ.

**<u>ບົດແນະນໍາທີ 9:</u> ປະເມີນ ແລະ ແກ້ໄຂຜົນກະທົບ ແລະ ສົ່ງເສີມຄວາມຮັບຜິດຊອບ**

- ການລົງທຶນຢ່າງມີຄວາມຮັບຜິດຊອບໃນ FAF ໃນອາຊຽນປະກອບມີກົນໄກຕ່າງໆໃນການປະເມີນ ແລະ ແກ້ໄຂຜົນກະທົບທາງດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ວັດທະນະ ທໍາ, ແລະ ສົ່ງເສີມຄວາມຮັບຜິດຊອບ, ໂດຍສະເພາະໃນການເຄົາລົບກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ, ຊົນເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ໂດຍ:
  - ຮຽກຮ້ອງ ແລະ ດໍາເນີນການປະເມີນຜົນກະທົບທີ່ເປັນເອກະລາດ ແລະ ໂປ່ງໃສທີ່ກ່ຽວຂ້ອງກັບທຸກພາກສ່ວນທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນກຸ່ມສ່ຽງ ແລະ ດ້ອຍໂອກາດທີ່ສຸດ.
  - ກໍານົດຂໍ້ມູນພື້ນຖານ ແລະ ຕົວຊີ້ວັດ ສໍາລັບການຕິດຕາມ ແລະ ວັດແທກຜົນກະທົບ, ໂດຍມີ ຄໍາ ເຫັນຈາກຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ.
  - ຄັດເລືອກເອົານັກລົງທຶນ ແລະ ໂຄງການລົງທຶນຢ່າງມີປະສິດທິຜົນເພື່ອຮັບປະກັນວ່ານັກລົງທຶນ ແລະ ໂຄງການສອດຄ່ອງກັບບຸລິມະສິດການພັດທະນາແຫ່ງຊາດ ແລະ ຄວາມຕ້ອງການຂອງຊຸມຊົນ, ແລະ ສອດຄ່ອງກັບຫຼັກການການລົງທຶນຢ່າງມີຄວາມຮັບຜິດຊອບຂອງອາຊຽນ FAF.
  - ກໍານົດມາດຕະການຫຼຸດຜ່ອນຜົນກະທົບເພື່ອແກ້ໄຂຜົນກະທົບທາງລົບ, ລວມທັງທາງເລືອກໃນການບໍ່ດໍາເນີນການລົງທຶນ ແລະ ຮັບປະກັນການຈັດຕັ້ງປະຕິບັດມາດຕະການເຫຼົ່ານັ້ນຢ່າງມີປະສິດທິຜົນ.
  - ຮັບປະກັນວ່າການປະເມີນຜົນເຫຼົ່ານີ້ແມ່ນສາທາລະນະ ແລະ ເຂົ້າເຖິງໄດ້.
  - ປະເມີນການປ່ຽນແປງ ແລະ ການສື່ສານຜົນໄດ້ຮັບກັບຜູ້ມີສ່ວນຮ່ວມຢ່າງເປັນປົກກະຕິ.
